ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

16-22 ພະຈິກ 2024
ປີທີ 13
ສະບັບທີ 994
ລາຍສັປະດາ

## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນພະຈິກ



(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດປະຈຳເດືອນພະຈິກ 2024 ໄດ້ດຳເນີນໃນວັນທີ 7-8 ແລະ 11 ພະຈິກ 2024 ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ; ມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານລັດຖະມົນຕີ ແລະ ຮອງລັດຖະມົນຕີກະຊວງ, ອົງການທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນແລະກົດໝາຍເປັນຕົ້ນ ບົດລາຍງານການກະກຽມຄວາມພ້ອມກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX; ບົດລາຍງານການກະກຽມກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ; ສານປະຊາຊົນສູງສຸດ,

ອ່ານຕໍ່ໜ້າ 7



### ແຈ້ງການ

#### ຂອງຄະນະເລຂາທິການສະພາແຫ່ງຊາດ

ອີງຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງປີ 2020 ມາດຕາ 59 ກ່ຽວກັບກອງປະຊຸມສະໄໝສາມັນປະຈຳປີຂອງສະພາແຫ່ງຊາດ ແລະ ອີງຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ສະບັບເລກທີ 277/ຄປຈ, ລົງວັນທີ 13 ພະຈິກ 2024.

ຄະນະເລຂາທິການສະພາແຫ່ງຊາດ ມີຄວາມຍິນດີ ແລະ ຂໍຖືເປັນກຽດແຈ້ງມາຍັງອົງການຈັດຕັ້ງພັກ, ລັດ ແລະ ພໍ່ແມ່ປະຊາຊົນລາວບັນດາເຜົ່າ ຊາບວ່າ: ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ຈະຈັດຂຶ້ນຢ່າງເປັນທາງການ ລະຫວ່າງວັນທີ 18 ພະຈິກ-11 ທັນວາ 2024 ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ, ນະຄອນຫຼວງວຽງຈັນ.

ດັ່ງນັ້ນ, ຄະນະເລຂາທິການສະພາແຫ່ງຊາດ ຈຶ່ງຂໍແຈ້ງມາເພື່ອຊາບດ້ວຍ.

ຜູ້ແທນປະຊາຊົນ PHOUTHEN PASAXON

## ຫາລື ແລະ ຮ່ວມກັນຊອກວິທີແກ້ໄຂ ບັນຫາເຄັ່ງຮ້ອນຮີບດ່ວນທີ່ເກີດຂຶ້ນໃນສັງຄົມ



ອ່ານຕໍ່ໜ້າ 7

## ຄະນະປະຈຳສະພາແຫ່ງຊາດ ປະຊຸມຮ່ວມກັບສານ ແລະ ໄອຍະການ

(ສພຊ)-ຕອນບ່າຍວັນທີ 12 ພະຈິກນີ້ ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງ

ອ່ານຕໍ່ໜ້າ 9



## ປະທານສະພາແຫ່ງຊາດ ພົບປະປະທານ ອົງການກວດສອບແຫ່ງລັດສະໂລວັກ



ອ່ານຕໍ່ໜ້າ 7

## ຍົກສູງຄຸນນະພາບດ້ານເນື້ອໃນ ກອງປະຊຸມສະໄໝສາມັນເທື່ອທີ 8



(ສພຊ)-ວັນທີ 13-15 ພະຈິກນີ້ ທີ່ຫໍປະຊຸມແຫ່ງຊາດ, ສະພາແຫ່ງຊາດ ໄດ້ຈັດກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ໂດຍການເປັນປະທານກ່າວເປີດຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ມີບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ຈາກ 18 ເຂດເລືອກຕັ້ງທົ່ວປະເທດ, ການນຳຂັ້ນສູງຂອງລັດຖະບານ, ອົງການທີ່ກ່ຽວຂ້ອງ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມຢ່າງຫຼວງຫຼາຍ.

ທ່ານ ປອ. ນາງສູນທອນ ໄຊຍະຈັກ ໄດ້ເນັ້ນໜັກເຖິງຈຸດປະສົງຂອງກອງປະຊຸມແມ່ນເພື່ອສ້າງເງື່ອນໄຂໃຫ້ແກ່ສະມາຊິກສະພາແຫ່ງຊາດ ໄດ້ຮັບຟັງການລາຍງານ, ການຊີ້ແຈງ-ອະທິບາຍຂອງບັນດາທ່ານລັດຖະມົນຕີ, ຮອງລັດຖະມົນຕີ, ຫົວໜ້າອົງການ ຕໍ່ເນື້ອໃນເອກະສານຕ່າງໆ ທີ່ຈະນຳເຂົ້າລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ເພື່ອ

ອ່ານຕໍ່ໜ້າ 8

## ສຳມະນາວິທະຍາສາດຕິດພັນກັບເນື້ອໃນ ກອງປະຊຸມສະໄໝສາມັນເທື່ອທີ 8

(ສພຊ) - ວັນທີ 8-11 ພະຈິກນີ້ ທີ່ແຂວງວຽງຈັນ, ສະພາແຫ່ງຊາດ (ສພຊ) ໄດ້ມີການຈັດກອງປະຊຸມສຳມະນາວິທະຍາສາດຕິດພັນກັບເນື້ອໃນທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ເຊິ່ງມີບັນດາທ່ານປະທານກຳມາທິການ ແລະ ຮອງປະທານກຳມາທິການພາຍໃນ ສພຊ, ປະທານສະພາປະຊາຊົນຂັ້ນແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ທົ່ວປະເທດ ພ້ອມດ້ວຍບັນດາທ່ານຕາງໜ້າຈາກກະຊວງ ແລະ ອົງການທີ່ກ່ຽວຂ້ອງ, ພ້ອມທັງຊ່ຽວຊານດ້ານເສດຖະກິດ ຈາກອົງການຈັດຕັ້ງສາກົນ ແລະ ແຂກຖືກເຊີນຈາກພາກສ່ວນຕ່າງໆ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ອ່ານຕໍ່ໜ້າ 6



ຮູ້ຈັກບຸນທາດຫຼວງ...? (ໜ້າ 8)



ຍີ່ປຸ່ນ... (ໜ້າ 10)




ເຮັດອຶງ ໃສ່ອຶງ... (ໜ້າ 12)

## ຂໍ່ານັບຮັບຕ້ອນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ຢ່າງສຸດໃຈ!

# ກອງປະຊຸມຄະນະປະຈຳການ ຄລຊ



(ສພຊ) - ວັນທີ 14 ພະຈິກຜ່ານມາ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມຄະນະປະຈຳການຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ (ຄລຊ) ໂດຍການເປັນປະທານຂອງທ່ານປອ. ໄຊສົມພອນພົມວິຫານກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ, ປະທານ ຄລຊ.

ໃນກອງປະຊຸມໄດ້ຮັບຟັງບົດລາຍງານຜົນກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ເທື່ອທີ 9 ສະໄໝທີ XI ຕໍ່ຮ່າງປັບປຸງລັດຖະທຳມະນູນ ຈາກການຂໍທິດຊີ້ນຳຕໍ່ກັບການປັບປຸງລັດຖະທຳມະນູນສະບັບປີ2015 ທີ່ຈະນຳສະເໜີທາບທາມຄຳເຫັນຈາກກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ສຸມໃສ່ປະກອບຄຳຄິດຄຳເຫັນຕໍ່ການປັບປຸງຕາມທິດຊີ້ນຳຂອງກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ.

**(ນາງ ອາລິນ ສຸພົມມະປະດິດ)**

# ກຜງສ ປະຊຸມຄົບຄະນະ ປະຈຳປີ 2024



(ສພຊ) - ວັນທີ 10 ພະຈິກຜ່ານມາ ທີ່ເມືອງວັງວຽງ ແຂວງວຽງຈັນ ໄດ້ມີກອງປະຊຸມຄົບຄະນະກຳມາທິການແຜນການ, ການເງິນ ແລະ ການກວດສອບ (ກຜງສ) ໂດຍການເປັນປະທານຂອງທ່ານ ປອ. ລີເບີ ລີບົ່ວປາວ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການແຜນການ, ການເງິນແລະການກວດສອບ; ມີບັນດາທ່ານປະທານແລະຮອງປະທານກຳມາທິການພາຍໃນສະພາແຫ່ງຊາດ, ບັນດາທ່ານສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງກຳມາທິການກຜງສ, ທ່ານຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ທ່ານຮອງລັດຖະມົນຕີກະຊວງການເງິນ, ທ່ານຮອງຜູ້ວ່າການທະນາຄານແຫ່ງ ສປປລາວ, ທ່ານຮອງປະທານອົງການກວດກາແຫ່ງລັດ, ທ່ານຮອງປະທານອົງການກວດສອບແຫ່ງລັດພ້ອມດ້ວຍບັນດາທ່ານຕາງໜ້າຈາກຂະແໜງການ, ອົງການກ່ຽວຂ້ອງ ແລະ ແຂກຖືກເຊີນ ເຂົ້າຮ່ວມ 80 ກວ່າທ່ານ.

ທ່ານ ປອ. ລີເບີ ລີບົ່ວປາວ ໄດ້ກ່າວວ່າ: ຫົວຂໍ້ເນື້ອໃນທີ່ພາກສ່ວນກ່ຽວຂ້ອງຂອງລັດຖະບານນຳມາລາຍງານໃນກອງປະຊຸມຄົບຄະນະຄັ້ງນີ້ ລ້ວນແຕ່ຕິດພັນກັບບັນຫາສຳຄັນທີ່ໄດ້ຍົກຂຶ້ນໃນກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດກັບ ຄະນະລັດຖະບານ ເປັນຕົ້ນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ, ແຜນກວດສອບ ແລະ ແຜນກວດກາທັງສະແດງຄວາມເຊື່ອໝັ້ນວ່າກອງປະຊຸມຄັ້ງນີ້ຈະຊ່ວຍໃຫ້ສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງກຳມາທິການແຜນການ, ການເງິນ ແລະ ການກວດສອບ ແລະ ຕາງໜ້າຂະແໜງການ ໄດ້ມີໂອກາດແລກປ່ຽນຄວາມຄິດຄວາມເຫັນໃນເບື້ອງຕົ້ນກ່ຽວກັບການສ້າງນິຕິກຳໃນຂົງເຂດແຜນການ, ການເງິນ ແລະ ການກວດສອບ-ກວດກາ, ສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດໃນແຕ່ລະປີ ເຊິ່ງຕິດພັນກັບພາລະບົດບາດ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງກຳມາທິການທີ່ຈະຕ້ອງໄດ້ຕີລາຄາສົມທຽບກັບການລົງຕິດຕາມກວດກາຕົວຈິງຂອງສະມາຊິກສະພາແຫ່ງຊາດຢູ່ບັນດາເຂດເລືອກຕັ້ງຂອງຕົນ, ຜົນການສະແດງອອກທາງດ້ານຄວາມຄິດເຫັນ ແລະ ການປະເມີນຕີລາຄາສະພາບບັນຫາດັ່ງກ່າວ ຈະເປັນປະໂຫຍດຢ່າງຫຼວງຫຼາຍໃນການເສີມຂະຫຍາຍ ແລະ ເປີດກວ້າງແນວຄວາມຄິດທີ່ດີ ໃຫ້ສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງກຳມາທິການ, ພາກສ່ວນທີ່ກ່ຽວຂ້ອງຂອງລັດຖະບານເພື່ອເປັນການອຳນວຍຄວາມສະດວກໃນການປະສານງານລະຫວ່າງອົງການນິຕິບັນຍັດ ກັບອົງການບໍລິຫານ ຕໍ່ກັບການພົວພັນວຽກງານ ເພື່ອພ້ອມກັນປະຕິບັດໜ້າທີ່ບໍລິການປະຊາຊົນໃຫ້ມີຄຸນນະພາບ ແລະ ປະສິດທິຜົນກວ່າເກົ່າ; ຈາກກອງປະຊຸມນີ້ຈະເຮັດໃຫ້ມີຄວາມຮັບຮູ້ເຂົ້າໃຈ ແລະ ໄດ້ຮັບຄວາມສະດວກຫຼາຍຂຶ້ນ ໃນການສືບຕໍ່ປະຕິບັດໜ້າທີ່ ກໍຄືການສືບຕໍ່ສະໜັບສະໜູນວຽກງານຂອງສະພາແຫ່ງຊາດ ພິເສດແມ່ນວຽກງານຂອງກຳມາທິການແຜນການ, ການເງິນ ແລະ ການກວດສອບ ໃຫ້ກ້າວສູ່ຄຸນນະພາບທີ່ດີຂຶ້ນ ເພື່ອເປັນການປະກອບສ່ວນເຂົ້າໃນການຊຸກຍູ້ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ, ຮັບປະກັນໃຫ້ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ໄດ້ຮັບການຈ

ອ່ານຕໍ່ໜ້າ 9

# ຄະນະປະຈຳສະພາແຫ່ງຊາດ ປະຊຸມຮ່ວມກັບ ອົງການກວດສອບ ແລະ ອົງການກວດກາ



(ສພຊ) - ວັນທີ 12 ພະຈິກຜ່ານມາ ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດກັບອົງການກວດສອບແຫ່ງລັດແລະອົງການກວດກາແຫ່ງລັດ ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານຄະນະປະຈຳສະພາແຫ່ງຊາດ, ມີປະທານອົງການກວດສອບແຫ່ງລັດ, ຮອງປະທານອົງການກວດກາແຫ່ງລັດ, ຕາງໜ້າກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ທະນາຄານແຫ່ງສປປລາວພ້ອມດ້ວຍແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງແມ່ນເພື່ອປຶກສາຫາລືແລະຮ່ວມກັນຊອກຫາວິທີແກ້ໄຂບັນຫາເຄັ່ງຮ້ອນຮີບດ່ວນທີ່ເກີດຂຶ້ນໃນສັງຄົມແລະສິ່ງຜົນກະທົບຕໍ່ການສ້າງສາພັດທະນາເສດຖະກິດ-ສັງຄົມ, ຊີວິດການເປັນຢູ່ຂອງປະຊາຊົນ ທັງເປັນການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຂອງບັນດາອົງການລັດຂັ້ນຕ່າງໆ; ເພື່ອສ້າງຄວາມເປັນເອກະພາບລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບ ອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ ໃນການແກ້ໄຂບັນຫາຕ່າງໆໃຫ້ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ ແລະ ກົດໝາຍ.

ກອງປະຊຸມໄດ້ຮັບຟັງການລາຍງານສະພາບພົ້ນເດັ່ນໃນການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກວດສອບແຫ່ງລັດ ປະຈຳປີ 2024 ແລະທິດທາງແຜນການປີ2025; ການເປັນເຈົ້າການປະສານສົມທົບ ແລະ ຊຸກຍູ້ເປົ້າໝາຍກວດສອບ, ອົງການຄຸ້ມຄອງເປົ້າໝາຍກວດສອບ ແລະ ພາກສ່ວນທີ່ກ່ຽວຂ້ອງ ແກ້ໄຂຜົນການກວດສອບໃນໄລຍະຜ່ານມາ ທັງໄຈ້ແຍກໃຫ້ເຫັນອັນໃດທີ່ສາມາດແກ້ໄຂໄດ້, ອັນໃດເປັນໜີ້ທວງຍາກ ແລະ ອັນໃດທີ່ບໍ່ສາມາດແກ້ໄຂໄດ້ ຫຼື ບໍ່ມີຕົວຕົນ ໃຫ້ລະອຽດ ແລ້ວນຳສະເໜີຄະນະປະຈຳສະພາແຫ່ງຊາດພິຈາລະນາ; ການຕິດຕາມ ແລະ ຊຸກຍູ້ເປົ້າໝາຍທີ່ຖືກກວດສອບ, ອົງການຄຸ້ມຄອງເປົ້າໝາຍກວດສອບແກ້ໄຂຜົນການກວດສອບໃຫ້ເຂັ້ມງວດ ແລະ ເດັດຂາດ ຕາມມາດຕາ 40 ຂອງກົດໝາຍວ່າດ້ວຍການກວດສອບແຫ່ງລັດ. ການລາຍງານສະພາບພົ້ນເດັ່ນໃນການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກວດກາລັດປະຈຳປີ 2024 ແລະທິດທາງແຜນ ການປີ 2025; ການເປັນເຈົ້າການ ແລະ ປະສານສົມທົບກັບອົງການຄຸ້ມຄອງເປົ້າໝາຍທີ່ຖືກກວດກາ ແລະ ພາກສ່ວນທີ່ກ່ຽວຂ້ອງແກ້ໄຂຜົນການກວດກາໃນໄລຍະຜ່ານມາ ພ້ອມທັງໄຈ້ແຍກຜົນຂອງການກວດກາອັນໃດສາມາດແກ້ໄຂໄດ້, ອັນໃດບໍ່ສາມາດແກ້ໄຂໄດ້ ຫຼື ບໍ່ມີຕົວຕົນ ໃຫ້ລະອຽດ ແລ້ວນຳສະເໜີຄະນະປະຈຳສະພາແຫ່ງຊາດພິຈາລະນາ. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນຄົ້ນຄວ້າ, ປະກອບຄຳເຫັນ, ພິຈາລະນາດ້ວຍເຫດດ້ວຍຜົນເພື່ອສ້າງຄວາມເປັນເອກະພາບກ່ຽວກັບວິທີການແກ້ໄຂວຽກງານໃນຕໍ່ໜ້າ ໃຫ້ມີບາດກ້າວຫັນປ່ຽນທີ່ດີຂຶ້ນ.

**(ນາງ ອາລິນ ສຸພົມມະປະດິດ)**

# ຄົ້ນຄວ້າປັບປຸງເນື້ອໃນລັດຖະທຳມະນູນ



(ສພຊ)-ວັນທີ 15-17 ພະຈິກ 2024 ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ, ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ສະບັບປີ 2015 (ຄລຊ) ໄດ້ຈັດກອງປະຊຸມຄົ້ນຄວ້າປັບປຸງເນື້ອໃນລັດຖະທຳມະນູນສະບັບປັບປຸງ ໂດຍການເປັນປະທານຂອງທ່ານປອ. ກອງແກ້ວ ໄຊສົງຄາມ ກຳມະການສູນກາງພັກ, ປະທານສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ, ກຳມະການ ຄລຊ; ມີບັນດາທ່ານຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ແລະ ກອງເລຂາຊ່ວຍວຽກເຂົ້າຮ່ວມ 30 ກວ່າທ່ານ.

ໃນໄລຍະຜ່ານມາ, ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ສະບັບປີ2015 ໄດ້ມີການນຳເອົາຮ່າງລັດຖະທຳມະນູນສະບັບດັ່ງກ່າວ ໄປທາບທາມ ແລະ ຈັດກອງປະຊຸມສຳມະນາຫຼາຍຄັ້ງ ທັງຢູ່ສູນກາງ ແລະ ທ້ອງຖິ່ນ; ພາຍຫຼັງປັບປຸງສຳເລັດເບື້ອງຕົ້ນ ກໍໄດ້ນຳໄປຜ່ານໃນກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ເທື່ອທີ 9 ສະໄໝທີ XI ເຊິ່ງກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ໂດຍສະເພາະແມ່ນບັນດາສະຫາຍກົມການເມືອງສູນກາງພັກ, ສະຫາຍເລຂາທິການສູນກາງພັກ ໄດ້ມີການຕັ້ງຄຳຖາມເຈາະຈີ້ມ ແລະ ໃຫ້ທິດຊີ້ນຳ ເພື່ອປັບປຸງລັດຖະທຳມະນູນສະບັບປີ2015 ໃຫ້ສົມບູນ, ຖືກຕ້ອງ ແລະ ສອດຄ່ອງຕາມທິດຊີ້ນຳຂອງມະຕິ 05/ກມສພ ກໍຄືເນື້ອໃນຈິດໃຈຂອງຄະນະບໍລິຫານງານສູນກາງພັກ.

ທີ່ປະຊຸມໄດ້ຮັບຟັງການສະເໜີຮ່າງບົດລາຍງານການປັບປຸງລັດຖະທຳມະນູນ, ຕາຕະລາງສົມທຽບລັດຖະທຳມະນູນສະບັບປີ 2015 ກັບ ລັດຖະທຳມະນູນສະບັບປັບປຸງໃໝ່ ປີ 2025; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຍົກສູງສະຕິປັນຍາຂອງຕົນສຸມໃສ່ປະກອບຄຳຄິດຄຳເຫັນເພື່ອປັບປຸງເນື້ອໃນຂອງລັດຖະທຳມະນູນ ໂດຍເຮັດເປັນແຕ່ລະໝວດແຕ່ລະມາດຕາຢ່າງລະອຽດ.

**(ສອນສັກ ວັນວິໄຊ)**

# ສຳມະນາວິທະຍາສາດວຽກງານວັດທະນະທຳ-ສັງຄົມ




(ສພຊ) - ວັນທີ 11 ພະຈິກຜ່ານມາ ທີ່ເມືອງວັງວຽງ ແຂວງວຽງຈັນ, ກຳມາທິການວັດທະນະທຳ-ສັງຄົມ (ກວທສ) ໄດ້ດຳເນີນກອງປະຊຸມສຳມະນາວິທະຍາສາດວຽກງານວັດທະນະທຳ-ສັງຄົມ ພາຍໃຕ້ການເປັນປະທານຂອງທ່ານ ບຸນຕາ ເທບພະວົງ ກຳມະການສຳຮອງສູນກາງພັກ, ຄະນະປະຈຳສະພາແຫ່ງຊາດ, ປະທານ ກວທສ ໂດຍການເຂົ້າຮ່ວມໂອ້ລົມຂອງທ່ານ ຄຳໃບ ດຳລັດ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ; ມີບັນດາທ່ານປະທານ-ຮອງປະທານສະພາປະຊາຊົນຂັ້ນແຂວງ, ສະມາຊິກສະພາແຫ່ງຊາດປະຈຳ 18 ເຂດເລືອກຕັ້ງທົ່ວປະເທດ, ຜູ້ຕາງໜ້າຈາກກະຊວງແລະອົງການທີ່ກ່ຽວຂ້ອງ, ຊ່ຽວຊານອົງການຢູນິເຊບ ແລະ ອົງການອາຫານໂລກ ພ້ອມດ້ວຍແຂກຖືກເຊີນຈຳນວນໜຶ່ງເຂົ້າຮ່ວມ.

ກອງປະຊຸມໄດ້ຄົ້ນຄວ້າ 6 ຫົວຂໍ້ຄື: 1. ນຳສະເໜີສະຖານະພາບຕົວຊີ້ບອກກ່ຽວກັບວຽກງານການສຶກສາຂອງເດັກນ້ອຍຈາກຜົນການສຳຫຼວດດັດຊະນີໝາຍສັງຄົມລາວໃນລະຫວ່າງ 5 ປີຜ່ານມາ (LSIS 2017-LSIS2023), 2. ສະຖານະພາບຂອງເດັກໃນໄລຍະວິກິດການອັນຜັນຜວນ: ທົບທວນຄືນທ່າອຽງທາງດ້ານມະຫາພາກໃນລະດັບສາກົນຕໍ່ການພັດທະນາແບບຍືນຍົງໃນອະນາຄົດ, 3. ການສ້າງຮາກຖານເພື່ອອະນາຄົດຂອງເດັກນ້ອຍໃນ ສປປລາວ, 4. ວຽກງານສາທາລະນະສຸກ ລວມມີການຄວບຄຸມການສູບຢາ, 5. ບົດນຳສະເໜີກ່ຽວກັບການສົ່ງເສີມສັກກະຍະພາບເດັກນ້ອຍ ແລະ ໄວໜຸ່ມ ໃນຍຸກຂອງການປ່ຽນແປງຕາມລະບົບປະຊາທິປະໄຕຂອງສປປລາວ, 6. ການສ້າງນະໂຍບາຍ ແລະ ແຜນຍຸດທະສາດການພັດທະນາທຶນດ້ານຊັບພະຍາກອນມະນຸດ.

**(ຂ່າວ: ກວທສ)**

# ຄົ້ນຄວ້າເນື້ອໃນຮ່າງກົດໝາຍການດຳເນີນຄະດີແພ່ງ

(ສພຊ) - ເພື່ອແລກປ່ຽນ ແລະ ສົນທະນາລະຫວ່າງບົດຮຽນຂອງຕ່າງປະເທດໂດຍສົມທຽບໃສ່ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຂອງ ສປປລາວ ທັງເປັນພື້ນຖານທາງດ້ານວິຊາການໃຫ້ແກ່ການປັບປຸງເນື້ອໃນຂອງຮ່າງກົດໝາຍດັ່ງກ່າວ ທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ໄດ້ມີການຄົ້ນຄວ້າເນື້ອໃນຢ່າງລະອຽດເລິກເຊິ່ງ ໂດຍມີການແລກປ່ຽນບົດຮຽນກັບຊ່ຽວຊານຕ່າງປະເທດ ເພື່ອເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍມີຄວາມຄົບຖ້ວນ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງຍາວນານ; ລະຫວ່າງວັນທີ 05-06 ພະຈິກນີ້ ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໄດ້ມີກອງປະຊຸມສຳມະນາຄົ້ນຄວ້າເນື້ອໃນຂອງຮ່າງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ) ໂດຍການເປັນປະທານຂອງທ່ານ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ; ເຂົ້າຮ່ວມມີບັນດາທ່ານຮອງປະທານກຳມາທິການ ສພຊ, ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ຮອງປະທານສານທະຫານຂັ້ນສູງ, ທ່ານ ປອ. ນາງ ເບີກິດ ກຣຸນມັນ ອະດີດລັດ ຖະມົນຕີກະຊວງຍຸຕິທຳຂອງລັດຖະບານກາງເຢຍລະມັນ, ຊ່ຽວຊານຕ່າງປະເທດຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ພ້ອມດ້ວຍຄະນະກົມ, ຄະນະພະແນກ ແລະ ພະນັກງານຈາກພາກສ່ວນທີ່ກ່ຽວຂ້ອງ.




ທ່ານ ຄຳແພງ ວິລະພັນ ໃຫ້ຮູ້ວ່າ: ກົດໝາຍສະບັບນີ້ແມ່ນໜຶ່ງໃນກົດໝາຍຈຳນວນ 9 ສະບັບ ທີ່ຈະນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ແລະ ການຈັດກອງປະຊຸມໃນຄັ້ງນີ້ ແມ່ນການທົບທວນຄືນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການດຳເນີນຄະດີແພ່ງຂອງ ສປປລາວ ທຽບໃສ່ການຈັດຕັ້ງປະຕິບັດຕົວຈິງຂອງບົດຮຽນປະເທດເຢຍລະມັນແນໃສ່ເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍສະບັບປັບປຸງນີ້ ມີຄວາມຈະແຈ້ງ, ຮັດກຸມ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ. ກອງປະຊຸມຈະໄດ້ຮັບຟັງການສະເໜີບົດຮຽນກ່ຽວກັບການດຳເນີນຄະດີແພ່ງຂອງປະເທດເຢຍລະມັນ ທັງເປັນການຍົກສູງຄວາມຮັບຮູ້ ແລະ ເຂົ້າໃຈຂອງຄະນະຮັບຜິດຊອບປັບປຸງຮ່າງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງຂອງ ສປປລາວ ແລະ ພາກສ່ວນທີ່ກ່ຽວຂ້ອງຕໍ່ເນື້ອໃນຂອງກົດໝາຍໃຫ້ຫຼາຍຂຶ້ນ; ສຳລັບຮ່າງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແມ່ນໄດ້ຜ່ານ

ອ່ານຕໍ່ໜ້າ 5

# ປະທານ ກຜງສ ພົບປະຜູ້ແທນ USAID




(ສພຊ) - ເພື່ອເປັນການເສີມຂະຫຍາຍການຮ່ວມມືທາງດ້ານວິຊາການ ໂດຍສະເພາະດ້ານເສດຖະກິດມະຫາພາກ, ຄະນະຜູ້ແທນຂອງອົງການພັດທະນາສາກົນສະຫະລັດອາເມລິກາ (The United States Agency for International Development-USAID) ນຳໂດຍທ່ານ ພອລ ເພລວາ (Paul Pelva) ຮອງຫົວໜ້າຫ້ອງການເສດຖະກິດຂອງອົງການພັດທະນາສາກົນສະຫະລັດອາເມລິກາ ປະຈຳນະຄອນຫຼວງວໍຊິງຕັນ ດີຊີ ໄດ້ເຂົ້າຢ້ຽມຂໍ່ານັບ ແລະ ເຮັດວຽກກັບທ່ານ ປອ. ລີເບີ ລີບົວປາວ ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ (ກຜງສ) ທັງເປັນປະທານຄະນະມິດຕະພາບລັດຖະສະພາລາວ-ອາເມລິກາ ເມື່ອວັນທີ 05 ພະຈິກນີ້ ເພື່ອປຶກສາຫາລືກ່ຽວກັບການຮ່ວມມືໃນໄລຍະຜ່ານມາ, ການແນະນຳບົດຮຽນໃນການແກ້ໄຂບັນຫາຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນແລະການຮ່ວມມືໃນຕໍ່ໜ້າ; ທ່ານປະທານ ກຜງສ ໄດ້ສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ແລະ ຂອບໃຈຕໍ່ການຊ່ວຍເຫຼືອສະພາແຫ່ງຊາດຂອງອົງການຜ່ານຄູ່ຮ່ວມພັດທະນາ ພ້ອມນີ້ຍັງໄດ້ຍົກໃຫ້ເຫັນພາລະບົດບາດຂອງກຳມາທິການ ກໍຄືສະພາແຫ່ງຊາດ ໃນການພິຈາລະນາຮັບຮອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ບັນຫາສຳຄັນຕ່າງໆ ລວມທັງແຈ້ງສະພາບພົ້ນເດັ່ນຂອງການພັດທະນາເສດຖະກິດ-ສັງຄົມ ສປປລາວ ໂດຍສັງເຂບ.

ທ່ານ ພອລ ເພລວາ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບ ແລະ ລາຍງານກ່ຽວກັບການຈັດຕັ້ງປະຕິບັດໂຄງການໃນໄລຍະຜ່ານມາ ໂດຍສະເພາະພາລະບົດບາດ ແລະ ການເຄື່ອນໄຫວຂອງອົງການເພື່ອການພັດທະນາສາກົນຂອງສະຫະລັດອາເມລິກາ ເຊິ່ງແມ່ນອົງການຂອງລັດຖະບານອາເມລິກາທີ່ໃຫ້ການຊ່ວຍເຫຼືອດ້ານມະນຸດສະທຳ, ການລຶບລ້າງຄວາມທຸກຍາກ, ການສົ່ງເສີມການປົກຄອງແບບປະຊາທິປະໄຕ, ການສ້າງໂອກາດທາງດ້ານເສດຖະກິດ, ການພັດທະນາແບບຍືນຍົງ, ການຊ່ວຍເຫຼືອດ້ານສຶກສາ-ສາທາ ແລະ ອື່ນໆ; ພ້ອມນີ້ຍັງໄດ້ສະເໜີທິດທາງແຜນການຮ່ວມມືໃນຕໍ່ໜ້າໃຫ້ຮັບຊາບ.

ການພົບປະໃນຄັ້ງນີ້ເປັນສ່ວນໜຶ່ງຂອງການຢ້ຽມຢາມ ສປປລາວ ໃນລະຫວ່າງວັນທີ 4-8 ພະຈິກ 2024 ນອກຈາກສະພາແຫ່ງຊາດແລ້ວຍັງໄດ້ພົບປະ ແລະ ເຮັດວຽກກັບບັນດາກະຊວງ, ອົງການ ແລະ ຂະແໜງການຕ່າງໆ ຂອງ ສປປລາວ ເຊິ່ງເປັນການປະກອບສ່ວນເສີມສ້າງສາຍພົວພັນ ແລະ ການຮ່ວມມືທີ່ດີນຳກັນລະຫວ່າງລາວ ແລະ ສະຫະລັດອາເມລິກາ ກໍຄືການພົວພັນຮ່ວມມືລະ ຫວ່າງສອງອົງການນິຕິບັນຍັດ ລາວ-ອາເມລິກາ ໃຫ້ເປັນຮູບປະທຳຫຼາຍຂຶ້ນ.

ທ່ານ ປອ. ລີເບີ ລີບົວປາວ ໄດ້ສະແດງຄວາມຂອບໃຈ ແລະ ອວຍພອນໃຫ້ຄະນະຈົ່ງປະສົບຜົນສຳເລັດໃນການເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ ພ້ອມທັງສະເໜີໃຫ້ສືບຕໍ່ໃຫ້ການຊ່ວຍເຫຼືອແກ່ ສປປລາວ ແລະ ໃຫ້ຄຳໝັ້ນສັນຍາວ່າ ຈະນຳໃຊ້ການຊ່ວຍເຫຼືອເຂົ້າໃນການພັດທະນາຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

# ກບຜ ປະຊຸມຄົບຄະນະ ປະຈຳປີ 2024



(ສພຊ) - ວັນທີ 06 ພະຈິກນີ້ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມຄົບຄະນະກຳມາທິການບັນດາເຜົ່າ (ກບຜ) ປະຈຳປີ 2024 ໂດຍການເປັນປະທານຂອງທ່ານຄຳຈັນ ໂສຕາປະເສີດຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການບັນດາເຜົ່າ; ເຂົ້າຮ່ວມມີບັນດາທ່ານປະທານ, ຮອງປະທານກຳມາທິການແລະສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງ ກບຜ ຈາກ 18 ເຂດເລືອກຕັ້ງທົ່ວປະເທດ, ບັນດາທ່ານການນຳຈາກກະຊວງພາຍໃນ, ກະຊວງກະສິກຳ ແລະ ປ່າໄມ້, ສູນກາງແນວລາວສ້າງຊາດ, 3 ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ສະຖາບັນວິທະຍາສາດເສດຖະກິດແລະສັງຄົມແຫ່ງຊາດ ແລະ ແຂກຖືກເຊີນ.

ກອງປະຊຸມໄດ້ຮັບຟັງຮ່າງສະຫຼຸບຕີລາຄາການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ວາງທິດທາງແຜນການເຄື່ອນໄຫວປະຈຳປີ 2025 ຂອງກຳມາທິການບັນດາເຜົ່າ; ບົດລາຍງານຜົນການຈັດຕັ້ງປະຕິບັດເບື້ອງຕົ້ນວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຕາມມະຕິສະບັບເລກທີ 134/ສພຊ, ລົງວັນທີ 01/7/2024; ການສ່ອງແສງລາຍງານສະພາບພົ້ນເດັ່ນຂອງປະຊາຊົນ-ຊົນຊັ້ນຄົນຕ່າງໆ ຕາມການຕິດຕາມກວດກາຂອງອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ; ບົດລາຍງານຜົນການຕິດຕາມກວດກາຂອງຄະນະປະຈຳສະພາແຫ່ງ

ອ່ານຕໍ່ໜ້າ 5

# ກອງປະຊຸມສະໄໝສາມັນເທື່ອທີ 8 ຈະໄຂຂຶ້ນໃນວັນທີ 18 ພະຈິກນີ້



(ສພຊ)-ຕອນບ່າຍວັນທີ 13 ພະຈິກນີ້, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ເຊິ່ງທ່ານໃຫ້ຮູ້ວ່າ: ບັນດາກຳມາທິການ ແລະ ຄະນະເລຂາທິການສະພາແຫ່ງຊາດ ໄດ້ປະສານສົມທົບກັບລັດຖະບານ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ ແລະ ພາກສ່ວນກ່ຽວຂ້ອງ ໃນການກະກຽມເນື້ອໃນຂອງແຕ່ລະພາກສ່ວນ ທີ່ຈະນຳເຂົ້າພິຈາລະນາຕົກລົງຢູ່ກອງປະຊຸມສະພາແຫ່ງຊາດໃນຄັ້ງນີ້; ມາເຖິງປັດຈຸບັນເຫັນວ່າການກະກຽມແມ່ນໄດ້ມີຄວາມຮັບປະກັນຮອບດ້ານ, ຄົບຖ້ວນ, ສອດຄ່ອງກັບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍແລ້ວ.

ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ຈະໄດ້ໄຂຂຶ້ນໃນວັນທີ 18 ພະຈິກ ເຖິງວັນທີ 11 ທັນວາ 2024 ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ, ຈະໃຊ້ເວລາດຳເນີນກອງປະຊຸມທັງໝົດ 17 ວັນ (ບໍ່ລວມວັນພັກທາງລັດຖະການ) ເຊິ່ງຈະພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ດັ່ງນີ້:

**• ວຽກງານລັດຖະບານ** ປະກອບມີ:

1. ບົດລາຍງານຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ປະຈຳປີ 2024 ແລະ ແຜນການປະຈຳປີ 2025 ຕິດພັນກັບວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ແຜນການລົງທຶນຂອງລັດ ປະຈຳປີ 2025, ແຜນຈັດສັນງົບປະມານໃຫ້ບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ປະຈຳປີ 2025; ການດັດແກ້ແຜນງົບປະມານແຫ່ງລັດ.

2. ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຕາມມະຕິສະ ພາແຫ່ງຊາດ ສະບັບເລກທີ 110/ສພຊ, ລົງວັນທີ 21 ພະຈິກ 2023.

3. ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານ 3 ສ້າງ ຕາມມະຕິສະພາແຫ່ງຊາດ ສະບັບເລກທີ 02/ສພຊ, ລົງວັນທີ 28 ມັງກອນ 2016 ວ່າດ້ວຍການຈັດຕັ້ງປະຕິບັດວຽກງານສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ.

4. ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາ, ການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ໃນໄລຍະຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ.

5. ບົດລາຍງານກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດວັດທະນະທຳ-ສັງຄົມ 4 ສະບັບ ຄື: ກົດໝາຍວ່າດ້ວຍການສຶກສາ, ກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, ກົດໝາຍວ່າດ້ວຍແຮງງານ ແລະ ກົດໝາຍວ່າດ້ວຍປ້າຍ.

6. ບົດລາຍງານກ່ຽວກັບຮ່າງແຜນຍຸດທະສາດການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ຮອດປີ 2030 ແລະ ວິໄສທັດຮອດປີ 2040.

**• ວຽກງານອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ** ປະກອບມີ:

1. ບົດລາຍງານຂອງອົງການກວດສອບແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025, ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ 2023.

2. ບົດລາຍງານຂອງອົງການກວດກາແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025, ບົດລາຍງານຜົນການກວດກາຕາມຜົນການກວດສອບປະຈຳປີ 2022.

**• ວຽກງານສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ** ປະກອບມີ:

1. ບົດລາຍງານຂອງສານປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025.

2. ບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025.

**• ວຽກງານສະພາແຫ່ງຊາດ** ປະກອບມີ:

1. ບົດລາຍງານຂອງສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025.

2. ບົດລາຍງານຂອງຄະນະກຳມະການລະດັບຊາດ ກ່ຽວກັບຄວາມຄືບໜ້າໃນການປັບປຸງລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2015.

ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍຈຳນວນ 9 ສະບັບ ໃນນີ້, ຮ່າງກົດໝາຍສ້າງໃໝ່ 2 ສະບັບຄື: ກົດໝາຍວ່າດ້ວຍທີ່ຢູ່ອາໄສແລະກົດໝາຍວ່າດ້ວຍພັດທະນາສີມືແຮງງານ; ກົດໝາຍປັບປຸງ 7 ສະບັບຄື: ກົດໝາຍວ່າດ້ວຍການກວດສອບອິດສະຫຼະ, ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ, ກົດໝາຍວ່າດ້ວຍການສຶກສາ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ, ກົດໝາຍວ່າດ້ວຍການພັດທະນາແລະປົກປ້ອງແມ່ຍິງ.

ກອງປະຊຸມສະພາແຫ່ງຊາດໃນເທື່ອນີ້ ຈະໄດ້ພິຈາລະນາຮັບຮອງເອົາມະຕິ ຈຳນວນ 20 ສະບັບ ໃນນີ້, ມະຕິຮັບຮອງເອົາວຽກງານລັດຖະບານ 6 ສະບັບ, ມະຕິຮັບຮອງເອົາວຽກງານອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ 2 ສະບັບ, ມະຕິຮັບຮອງເອົາວຽກງານສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງ 2 ສະບັບ, ມະຕິຮັບຮອງເອົາວຽກງານສະພາແຫ່ງຊາດ 1 ສະບັບ ແລະ ມະຕິຮັບຮອງເອົາບັນດາກົດໝາຍ 9 ສະບັບ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໃນນາມຫົວໜ້າກອງເລຂາກອງປະຊຸມສະໄໝສາມັນເທື່ອທີ 8, ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ເຊີນຊວນບັນດາທ່ານພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງປະຊາຊົນບັນດາເຜົ່າທຸກຊັ້ນຄົນໃນທົ່ວປະເທດ ແລະພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ຈົ່ງພ້ອມກັນຕິດຕາມການດຳເນີນກອງປະຊຸມສະໄໝສາມັນຄັ້ງນີ້ ແລະ ຍັງແຈ້ງໃຫ້ຊາບວ່າ ໃນໄລຍະກະກຽມ ແລະດຳເນີນກອງປະຊຸມ, ຄະນະເລຂາທິການສະພາແຫ່ງຊາດໄດ້ຈັດຕັ້ງໜ່ວຍງານເພື່ອຮັບເອົາຄຳຄິດຄຳເຫັນແລະຄຳສະເໜີໂດຍກົງຈາກປະຊາຊົນ ທີ່ຈະສົ່ງໄປຍັງກອງປະຊຸມ ເຊິ່ງສາມາດສົ່ງຕາມວິທີລຸ່ມນີ້:

- ສາຍດ່ວນ ໝາຍເລກ: 156 (ໃນໂມງລັດຖະການ)
- ອີເມວ: nalao.156@gmail.com
- ແອັປພລິເຄຊັນ: Laona

# ສ້າງຄວາມເຂັ້ມແຂງວຽກງານ ປະເມີນຜົນການປະຕິບັດວຽກງານ



(ສພຊ) - ວັນທີ 9-11 ພະຈິກຜ່ານມາ ທີ່ເມືອງວັງວຽງ ແຂວງວຽງຈັນ, ກົມຈັດຕັ້ງ-ພະນັກງານ ໄດ້ຈັດກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງດ້ານວິຊາການໃນວຽກງານປະເມີນຜົນການປະຕິບັດວຽກງານ ໃຫ້ແກ່ພະນັກງານ-ລັດຖະກອນພາຍໃນສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ ເຊິ່ງມີວິທະຍາກອນຮັບເຊີນຈາກກະຊວງພາຍໃນ ເຂົ້າຮ່ວມ; ຈຸດປະສົງການຈັດເຝິກອົບຮົມຄັ້ງນີ້ແມ່ນເພື່ອເຝິກອົບຮົມໃຫ້ແກ່ຜູ້ທີ່ຮັບຜິດຊອບວຽກງານປະເມີນຜົນແນໃສ່ຍົກລະດັບຄວາມຮູ້ຄວາມສາມາດ, ຄວາມເຂົ້າໃຈທາງດ້ານທິດສະດີ, ຫຼັກການ ແລະສາມາດປະຕິບັດຢ່າງຖືກຕ້ອງ, ສອດຄ່ອງກັບລະບຽບການ ແລະນິຕິກຳທີ່ກຳນົດໄວ້ ທັງເປັນການສົນທະນາແລກປ່ຽນບົດຮຽນລະຫວ່າງວິທະຍາກອນກັບຜູ້ເຂົ້າຮ່ວມເຝິກອົບຮົມ ເພື່ອເສີມຂະຫຍາຍຫົວຄິດປະດິດສ້າງ ແລະຄວາມເປັນເອກະພາບໃນການປະຕິບັດໜ້າທີ່ວຽກງານ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໄດ້ມີຄຳເຫັນໂອ້ລົມວ່າ: ວຽກງານປະເມີນຜົນການປະຕິບັດໜ້າທີ່ວຽກງານຂອງພະນັກງານ-ລັດຖະກອນ ເປັນວຽກທີ່ມີຄວາມໝາຍຄວາມສຳຄັນ; ສະນັ້ນ, ຈຶ່ງໄດ້ຈັດກອງປະຊຸມເຝິກອົບຮົມຄັ້ງນີ້ຂຶ້ນຈຸດປະສົງແມ່ນເພື່ອຍົກລະດັບຄວາມຮູ້, ຄວາມເຂົ້າໃຈຢ່າງເປັນລະບົບໃຫ້ແກ່ຜູ້ຮັບຜິດຊອບວຽກງານດັ່ງກ່າວ. ບັນດາບົດຮຽນ, ປະສົບການ ທີ່ທາງວິທະຍາກອນນຳມາເຜີຍແຜ່ ຈະເປັນບ່ອນອີງ, ເປັນເຄື່ອງມືສຳຄັນທີ່ສາມາດນຳໄປໝູນໃຊ້ແລະຈັດຕັ້ງປະຕິບັດຕົວຈິງໃນການປະເມີນຜົນການປະຕິບັດໜ້າທີ່ວຽກງານຂອງພະນັກງານ-ລັດຖະກອນ ໃຫ້ມີຄວາມຊັດເຈນ, ຖືກຕ້ອງຕາມມາດຕະຖານ, ສອດຄ່ອງກັບສະພາບຄວາມເປັນຈິງ, ສາມາດເລືອກໄດ້ວຽກດີຄົນເດັ່ນ ເພື່ອດຳເນີນການຍ້ອງຍໍຕາມເປົ້າໝາຍ ເພື່ອໃຫ້ເກີດປະໂຫຍດສູງສຸດແກ່ຜູ້ທີ່ມີຄວາມດຸໝັ່ນ, ຫ້າວຫັນ, ມີຜົນສຳເລັດດ້ວຍຄຸນນະພາບສູງໃນໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ; ພ້ອມນີ້, ການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນແມ່ນວິທີການຕົ້ນຕໍແນໃສ່ຊອກໃຫ້ເຫັນດ້ານຕັ້ງໜ້າເພື່ອຊຸກຍູ້ສົ່ງເສີມ ແລະ ຂໍ້ຫຍຸ້ງຍາກສິ່ງທ້າທາຍທີ່ຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂ. ການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນເປັນຂໍ້ມູນພື້ນຖານໃນການວາງແຜນພັດທະນາຊັບພະຍາກອນມະນຸດ ເວົ້າລວມ, ເວົ້າສະເພາະກໍແມ່ນການວາງແຜນສ້າງ, ການບັນຈຸສັບຊ້ອນ, ເລື່ອນຊັ້ນ-ຂັ້ນ, ເລື່ອນຕຳແໜ່ງບໍລິຫານ ແລະການຍ້ອງຍໍຕ່າງໆ ຢ່າງຖືກຕ້ອງ ແລະ ເປັນລະບົບ.

ກອງປະຊຸມໄດ້ຮັບຟັງການເຜີຍແຜ່ດຳລັດວ່າດ້ວຍການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ສະບັບເລກທີ 300/ລບ, ລົງວັນທີ 13 ກຸມ ພາ 2017; ຄຳແນະນຳຂອງກະຊວງພາຍໃນ ກ່ຽວກັບການຈັດຕັ້ງປະຕິບັດດຳລັດວ່າດ້ວຍການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ສະບັບເລກທີ 06/ພນ, ລົງວັນທີ 02 ພຶດສະພາ 2018; ຄູ່ມືແນະນຳການຈັດຕັ້ງປະຕິບັດການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ສະບັບເລກທີ 01/ປພລ, ລົງວັນທີ 29 ສິງຫາ 2018. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ສຸມໃສ່ຄົ້ນຄວ້າ, ສະແດງຄຳຄິດຄຳເຫັນ ແລະ ແລກປ່ຽນບົດຮຽນພ້ອມທັງຈັດເປັນກຸ່ມປະຕິບັດຕົວຈິງໃນການປະເມີນຜົນປົກກະຕິ ເພື່ອເຮັດໃຫ້ວຽກງານປະເມີນຜົນມີປະສິດທິພາບແລະປະສິດທິຜົນຫຼາຍຂຶ້ນ.

ກອງປະຊຸມໃນຄັ້ງນີ້ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການ STEPS ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ອານຸສອນ ພູມມີທອນ)**

# ກອງປະຊຸມຄົບຄະນະ ກກໝ ປະຈຳປີ 2024



(ສພຊ) - ວັນທີ 04 ພະຈິກຜ່ານມາ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມຄົບຄະນະຂອງກຳມາທິການກົດໝາຍ (ກກໝ) ປະຈຳປີ 2024 ໂດຍການເປັນປະທານຂອງທ່ານ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ; ເຂົ້າຮ່ວມມີບັນດາທ່ານຮອງປະທານກຳມາທິການພາຍໃນສພຊ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງລັດຖະມົນຕີກະຊວງພາຍໃນ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບັນດາທ່ານສະມາຊິກສະພາແຫ່ງຊາດທີ່ສັງກັດ ກກໝ ແລະ ແຂກຖືກເຊີນ ເຂົ້າຮ່ວມ 60 ກວ່າທ່ານ.

ກອງປະຊຸມໄດ້ຮັບຟັງການລາຍງານ ແລະ ປະກອບຄຳເຫັນໃສ່ຮ່າງບົດສະຫຼຸບການເຄື່ອນໄຫວວຽກງານປີ 2024 ແລະ ທິດທາງແຜນການເຄື່ອນໄຫວວຽກງານປີ 2025 ຂອງກຳມາທິການກົດໝາຍ; ຮ່າງແຜນການສ້າງ ແລະ ປັບປຸງກົດໝາຍ ປະຈຳປີ 2025 ຂອງຄະນະປະຈຳສະພາແຫ່ງຊາດ; ການລາຍງານຂອງກະຊວງຍຸຕິທຳ ແລະ ກະຊວງພາຍໃນ ກ່ຽວກັບວຽກງານສ້າງແລະປັບປຸງກົດໝາຍ, ວຽກງານໂຄສະນາເຜີຍແຜ່ກົດໝາຍ ແລະວຽກງານການຜັນຂະຫຍາຍມາດຕາຂອງກົດໝາຍ ອອກເປັນນິຕິກຳໃຕ້ກົດໝາຍ ປະຈຳປີ 2024; ແລະຜ່ານຮ່າງມະຕິກອງປະຊຸມຄົບຄະນະຂອງ ກກໝ ປະຈຳປີ 2024.

ທ່ານ ຄຳແພງ ວິລະພັນ ໄດ້ມີຄຳເຫັນເນັ້ນໜັກໃຫ້ສຸມໃສ່ກະກຽມຮຽບຮຽງບັນດາກົດໝາຍທີ່ຈະຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ໃຫ້ສຳເລັດໂດຍໄວເພື່ອໃຫ້ທັນໄດ້ປະກາດໃຊ້ຕາມກົດໝາຍ ແລະ ລະບຽບການກຳນົດ; ຮີບຮ້ອນປະສານສົມທົບກັບບັນດາກະຊວງ-ອົງການ ທີ່ເປັນເຈົ້າຂອງກົດໝາຍ ແລະ ບັນດາກຳມາທິການທີ່ກ່ຽວຂ້ອງ ເພື່ອກະກຽມແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ (2026-2030) ແລະ ແຜນການສ້າງ ແລະ ປັບປຸງກົດໝາຍ ປີ 2025 ໃຫ້ສຳເລັດໂດຍໄວເພື່ອລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາຕົກລົງ ແລະ ໃຫ້ທັນໄດ້ປະກາດໃຊ້ໃນຕົ້ນປີ 2025; ເອົາໃຈໃສ່ປະສານສົມທົບກັບບັນດາກະຊວງ-ອົງການທີ່ເປັນເຈົ້າຂອງກົດໝາຍເພື່ອສ້າງເງື່ອນໄຂຕ່າງໆໃນການນຳເອົາບັນດາກົດໝາຍທີ່ໄດ້ປະກາດໃຊ້ແລ້ວລົງໂຄສະນາເຜີຍແຜ່ຢູ່ສູນກາງແລະທ້ອງຖິ່ນ ເພື່ອໃຫ້ປະຊາຊົນລາວບັນດາເຜົ່າ ໄດ້ຮັບຮູ້, ເຂົ້າໃຈຢ່າງກວ້າງຂວາງດ້ວຍຫຼາຍວິທີ, ຫຼາຍຮູບການ.

**(ນາງ ອາລິນ ສຸພົມມະປະກິດ)**

## ຄົ້ນຄວ້າ...

(ຕໍ່ຈາກໜ້າ 3)

ການກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍສຳເລັດແລ້ວ ເຊິ່ງຢູ່ໃນຂັ້ນຕອນການກະກຽມລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີຫຍໍ້ບົດຮຽນກ່ຽວກັບກົດໝາຍວ່າດ້ວຍການປົກຄອງຂອງຕ່າງປະເທດ ແລະ ບົດຮຽນກ່ຽວກັບການດຳເນີນຄະດີແພ່ງຂອງຕ່າງປະເທດ ຈາກຊ່ຽວຊານຕ່າງປະເທດ, ເນື້ອໃນຂອງຮ່າງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຂອງ ສປປລາວ ພ້ອມທັງສະເໜີປະເດັນທີ່ຢາກແລກປ່ຽນກັບຊ່ຽວຊານຕ່າງປະເທດ ຈາກທ່ານ ບຸນຂວາງ ທະວີສັກ ຮອງປະທານສານປະຊາຊົນສູງສຸດ; ຈາກນັ້ນ, ກໍໄດ້ຄົ້ນຄວ້າ, ປະກອບຄຳເຫັນ ແລະຊັກຖາມຕໍ່ເນື້ອໃນຂອງກົດໝາຍສະບັບດັ່ງກ່າວ ທີ່ຕິດພັນກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງຂະແໜງການຕົນ ແນໃສ່ເຮັດໃຫ້ເນື້ອໃນມີຄວາມກະຈ່າງແຈ້ງ, ຮັດກຸມແລະແທດເໝາະກັບສະພາບຄວາມເປັນຈິງໃນປັດຈຸບັນ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກ STEPs ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ນາງ ອານິຕາ ມ່ວນສະຫວັດ)**

## ກບຜ...

(ຕໍ່ຈາກໜ້າ 3)

ຊາດ ປະຈຳປີ 2024 ໃນການຈັດຕັ້ງປະຕິບັດວຽກງານ 3 ສ້າງ ຕາມມະຕິ 02/ສພຊ, ລົງວັນທີ 28/01/2016; ພ້ອມນັ້ນ, ຍັງໄດ້ຮັບຟັງການປະກອບຄຳຄິດຄຳເຫັນສັງລວມຜົນການຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານ 3 ສ້າງ ຈາກເຂດເລືອກຕັ້ງທີ 2, 7, 8, 9, 12, 16, 17. ຈາກນັ້ນ, ບັນດາຜູ້ແທນຈາກສູນກາງ ແລະ ທ້ອງຖິ່ນໄດ້ປະກອບຄຳເຫັນເພີ່ມຕື່ມເພື່ອແລກປ່ຽນແລະຖອດຖອນບົດຮຽນກ່ຽວກັບການເຄື່ອນໄຫວວຽກງານໃນຂອບເຂດຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ ພ້ອມທັງແລກປ່ຽນຄຳຄິດຄຳເຫັນກ່ຽວກັບການພົວພັນຮ່ວມມືກັນໃນໄລຍະ 1 ປີຜ່ານມາ ລະຫວ່າງກຳມາທິການບັນດາເຜົ່າ ກັບກຳມະການຂອງ ກບຜ ທຸກເຂດເລືອກຕັ້ງ ແລະ ບັນດາກະຊວງທີ່ກ່ຽວຂ້ອງ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ເພື່ອມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດວຽກງານຕໍ່ໜ້າໃຫ້ມີຄວາມຄ່ອງຕົວກວ່າເກົ່າ.

ທ່ານ ຄຳຈັນ ໂສຕາປະເສີດ ໄດ້ກ່າວວ່າ: ຜົນສຳເລັດຂອງກອງປະຊຸມຄົບຄະນະກຳມາທິການບັນດາເຜົ່າ ປະຈຳປີ 2024 ແມ່ນໝາກຜົນລວມຍອດການເຄື່ອນໄຫວໃນໄລຍະ 1 ປີ ຜ່ານມາ ຂອງກຳມາທິການ ແລະ ບັນດາກຳມະການຂອງກຳມາທິການບັນດາເຜົ່າ ທີ່ໄດ້ພ້ອມກັນຜ່ານຜ່າທຸກຄວາມຫຍຸ້ງຍາກຈັດຕັ້ງປະຕິບັດທຸກໜ້າທີ່ວຽກງານຈົນໄດ້ຮັບຜົນສຳເລັດ, ຄຽງຄູ່ກັບຜົນງານໃນ 1 ປີຜ່ານມາທີ່ຍາດມາໄດ້ນັ້ນ ກໍຍັງມີບາງດ້ານຄົງຄ້າງທີ່ຈະຕ້ອງໄດ້ສືບຕໍ່ນຳໄປຄົ້ນຄວ້າພິຈາລະນາແກ້ໄຂ ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່ ທີ່ພັກ-ລັດ ແລະ ສະພາແຫ່ງຊາດ ໄດ້ມອບໝາຍໃຫ້ໃຫ້ນັບມື້ນັບດີຂຶ້ນຢ່າງບໍ່ຢຸດຢັ້ງ.

**(ນາງ ອາລິນ ສຸພົມມະປະກິດ)**

# ເຜີຍແຜ່ຜົນສຳເລັດກອງປະຊຸມ AIPA-45



(ສພຊ) - ຕອນເຊົ້າວັນທີ 07 ພະຈິກນີ້ ທີ່ສະພາແຫ່ງຊາດ, ທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ໄດ້ເຂົ້າຮ່ວມ ແລະ ມີຄຳເຫັນກ່າວເປີດກອງປະຊຸມເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດ ອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ເຊິ່ງຈັດຂຶ້ນໂດຍກອງເລຂາໄອປາ; ມີບັນດາທູດ, ທູຕານຸທູດ ຂອງປະເທດສະມາຊິກອາຊຽນປະຈຳອາຊຽນ ເຂົ້າຮ່ວມແບບເຊິ່ງໜ້າ ແລະ ກອງເລຂາຂອງລັດຖະສະພາສະມາຊິກໄອປາ, ລັດຖະສະພາສັງເກດການໄອປາ ແລະ ຄູ່ຮ່ວມພັດທະນາຂອງໄອປາ ເຂົ້າຮ່ວມແບບອອນລາຍ ລວມທັງໝົດ 47 ທ່ານ.

ກອງປະຊຸມໄດ້ຮັບຟັງການລາຍງານຈາກທ່ານເລຂາທິການໃຫຍ່ໄອປາ ກ່ຽວກັບການປະຕິບັດໜ້າທີ່ວຽກງານຂອງໄອປາ ຕະຫຼອດປີ 2024 ໂດຍສະເພາະແມ່ນຜົນສຳເລັດຂອງກອງປະຊຸມສະມັດຊາໃຫຍ່ໄອປາຄັ້ງທີ 45 ທີ່ສະພາແຫ່ງຊາດລາວ ເປັນເຈົ້າພາບຈັດຂຶ້ນທີ່ນະຄອນຫຼວງວຽງຈັນ ໃນລະຫວ່າງວັນທີ 17-23 ຕຸລາຜ່ານມາ ເຊິ່ງເປັນໂອກາດດີໃນການເຜີຍແຜ່ບັນດາມະຕິ ແລະ ເນື້ອໃນສຳຄັນຕ່າງໆທີ່ກອງປະຊຸມສະມັດຊາໃຫຍ່ໄອປາຄັ້ງທີ 45 ໄດ້ຮັບຮອງເອົາ ໃຫ້ທູຕານຸທູດແລະບັນດາອົງການຈັດຕັ້ງສາກົນໄດ້ຮັບຊາບ ແລະ ເຂົ້າໃຈຕໍ່ກັບບົດບາດຂອງໄອປາຢ່າງກວ້າງຂວາງຍິ່ງຂຶ້ນ.

**(ກົມພົວພັນລັດຖະສະພາຫຼາຍຝ່າຍ)**




# ຜູ້ແທນສະພາແຫ່ງຊາດ ເຂົ້າຮ່ວມ ກອງປະຊຸມໂຕະມົນ AAWC




(ສພຊ) - ລະຫວ່າງວັນທີ 04-07 ພະຈິກ 2024 ທ່ານ ສຈ. ປອ. ທົງຄຳ ສຸວັນນະວົງ ກຳມະການຂອງກຳມາທິການການຕ່າງປະເທດ ແລະ ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະສິ່ງແວດລ້ອມ ຕາງໜ້າໃຫ້ສະພາແຫ່ງຊາດລາວ ແລະ ໃນນາມເປັນສະມາຊິກສະພາທີ່ປຶກສາອົງການ AAWC ພ້ອມດ້ວຍທ່ານເອກອັກຄະລັດຖະທູດ ແຫ່ງ ສປປລາວ ປະຈຳ ສ.ເກົາຫຼີ ໄດ້ເຂົ້າຮ່ວມກອງປະຊຸມໂຕະມົນສະພາທີ່ປຶກສາເລື່ອງພະຍາກອນອາກາດ ແລະ ນ້ຳ ຂອງສະພາແຫ່ງຊາດບັນດາປະເທດສະມາຊິກອາຊີ (The Asia National Assembly Water Consultative Board Round-Table) ທີ່ຈັດຂຶ້ນຢູ່ນະຄອນຫຼວງເຊອູນ, ສ.ເກົາຫຼີ ເຊິ່ງມີບັນດາປະເທດໃນຂົງເຂດເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ ໄດ້ປຶກສາຫາລື ແລະ ແລກປ່ຽນຄວາມຄິດເຫັນບັນຫາທີ່ກະທົບຂອງແຕ່ລະປະເທດ, ຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນ, ການຄຸ້ມຄອງນ້ຳທາງດ້ານກົດໝາຍ ແລະ ນິຕິກຳຕ່າງໆ, ບັນຫາຄຸ້ມຄອງການບໍລິຫານນ້ຳ, ແລກປ່ຽນປະສົບການ ແລະ ວິທີການແກ້ໄຂບັນຫານ້ຳຂອງແຕ່ລະປະເທດ, ການແລກປ່ຽນປະສົບການ, ບັນຫາການຮ່ວມມືລະຫວ່າງປະເທດໃນຂົງເຂດ ເພື່ອການນຳໃຊ້ຊັບພະຍາກອນນ້ຳຮ່ວມກັນ, ການແກ້ໄຂບັນຫາພະຍາກອນອາກາດ ແລະ ບັນຫານ້ຳແບບຍືນຍົງ.

ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ປະກອບຄຳເຫັນກ່ຽວກັບການຄົ້ນຄວ້ານະໂຍບາຍກ່ຽວກັບນ້ຳ, ພາລະບົດບາດແລະການຊ່ວຍເຫຼືອຂອງອົງການຕ່າງໆຂອງສ.ເກົາຫຼີໃນປະເທດຕ່າງໆ, ວິທີການບໍລິຫານ ແລະ ນຳໃຊ້ຮ່ວມກັນຂອງພະຍາກອນອາກາດ ແລະນ້ຳ, ການແລກປ່ຽນປະສົບການຂອງແຕ່ລະປະເທດ, ການລາຍງານຂອງອົງການຕ່າງໆຂອງ ສ.ເກົາຫຼີ ແລະ ການສະເໜີໂຄງການຂອງແຕ່ລະປະເທດ; ນອກຈາກນັ້ນ, ຍັງໄດ້ໄປຢ້ຽມຢາມໂຄງການຕ່າງໆເຊັ່ນ: ໂຄງການເຂື່ອນໄຟຟ້າ, ໂຄງການລະບົບການຄຸ້ມຄອງນ້ຳໂດຍລະບົບປັນຍາປະດິດ (ເອໄອ), ໂຄງການພັດທະນາສິ່ງແວດລ້ອມຄົບວົງຈອນ ແລະໂຄງການພັດທະນາຕົວເມືອງໃໝ່ສີຂຽວ.

# ກປຊສ ປະຊຸມຄົບຄະນະປະຈຳປີ 2024



ສພຊ)-ກອງປະຊຸມຄົບຄະນະຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ກປຊສ) ປະຈຳປີ 2024 ໄດ້ຈັດຂຶ້ນເມື່ອວັນທີ 4 ພະຈິກຜ່ານມາ ທີ່ສະພາແຫ່ງຊາດ (ສພຊ) ໂດຍການເປັນປະທານຂອງທ່ານ ພົຕ. ປອ. ວົງສັກ ພັນທະວົງ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ມີບັນດາທ່ານຮອງປະທານກຳມາທິການພາຍໃນ ສພຊ, ສະມາຊິກສະພາແຫ່ງຊາດທີ່ເປັນກຳມະການສັງກັດ ກປຊສ, ຮອງລັດຖະມົນຕີກະຊວງປ້ອງກັນປະເທດ, ຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ, ຮອງປະທານສະຫະພັນນັກຮົບເກົ່າແຫ່ງຊາດ, ຫົວໜ້າຫ້ອງການຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ) ສູນກາງ, 2 ກອງບັນຊາການທະຫານແລະ ປກສ ນະຄອນຫຼວງ ແລະ ແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມຄັ້ງນີ້ ໄດ້ຮັບຟັງບົດສະຫຼຸບ, ຕີລາຄາການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2025 ຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ບົດລາຍງານຂອງກະຊວງປ້ອງກັນປະເທດ ພາຍໃຕ້ຫົວຂໍ້ "ສະພາບ ແລະ ການປົກປັກຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນ", ບົດລາຍງານຂອງກະຊວງປ້ອງກັນຄວາມສະຫງົບ ພາຍໃຕ້ຫົວຂໍ້ "ການແກ້ໄຂບັນຫາຢາເສບຕິດ ແລະ ປາກົດການຫຍໍ້ທໍ້ເກີດຂຶ້ນໃນສັງຄົມປັດຈຸບັນ", ບົດລາຍງານຂອງສະຫະພັນນັກຮົບເກົ່າແຫ່ງຊາດ ພາຍໃຕ້ຫົວຂໍ້ "ການສຶກສາອົບຮົມຄົນຮຸ່ນໃໝ່ ແລະ ການປະຕິບັດນະໂຍບາຍຕໍ່ສະມາຊິກນັກຮົບເກົ່າ", ບົດລາຍງານຂອງຫ້ອງການຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບສູນກາງ ພາຍໃຕ້ຫົວຂໍ້ "ສະພາບການພົ້ນເດັ່ນຂອງໂລກ ແລະ ພາກພື້ນໃນປັດຈຸບັນ ແລະ ກົນອຸບາຍຂອງອິດທິກຳລັງປໍລະປັກຕໍ່ ສປປລາວ"; ຈາກນັ້ນ, ບັນດາຜູ້ແທນກອງປະຊຸມ ກໍໄດ້ຄົ້ນຄວ້າ, ປະກອບຄຳຄິດຄຳເຫັນຕໍ່ບົດສະຫຼຸບແລະແຜນການຂອງກປຊສ, ຕໍ່ບັນດາບົດລາຍງານຂອງ 4 ພາກສ່ວນແລະບັນຫາທີ່ພົວພັນເຖິງຄວາມໝັ້ນຄົງໃນສະເພາະໜ້າ ແລະ ຍາວນານ ເພື່ອນຳສະເໜີລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ໃຫ້ທິດຊີ້ນຳໃນການແກ້ໄຂ ພ້ອມທັງຮັບຮອງເອົາຮ່າງມະຕິກອງປະຊຸມຄົບຄະນະປະຈຳປີ 2024 ຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**(ສອນສັກ ວັນວິໄຊ)**



**ສຳມະນາ...**

(ຕໍ່ຈາກໜ້າ 1)

ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ເນັ້ນໜັກເຖິງຈຸດປະສົງຂອງກອງປະຊຸມໃນຄັ້ງນີ້ ແມ່ນເພື່ອສ້າງຄວາມຮັບຮູ້, ເຂົ້າໃຈໂດຍພື້ນຖານໃຫ້ແກ່ສະມາຊິກສະພາແຫ່ງຊາດ ກ່ຽວກັບສະພາບລວມຂອງເສດຖະກິດມະຫາພາກ, ການປົກປ້ອງທາງສັງຄົມ, ການປ່ຽນແປງດິນຟ້າອາກາດ ແລະ ການເຄື່ອນຍ້າຍຖິ່ນຖານ, ບັນດາວຽກງານຂອງກຳມາທິການແຜນການ, ການເງິນ ແລະ ການກວດສອບ, ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມແລະກຳມາທິການວັດທະນະທຳ-ສັງຄົມ ໂດຍມີບັນດາຊ່ຽວຊານທັງພາຍໃນ ແລະ ຕ່າງປະເທດຫຼາຍທ່ານມາໃຫ້ບົດຮຽນດ້ານຕ່າງໆທີ່ເປັນຜົນປະໂຫຍດຫຼາຍຕໍ່ເນື້ອໃນທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ໃຫ້ແກ່ ສສຊ ໃນບັນດາເຂດເລືອກຕັ້ງທົ່ວປະເທດ ກ່ຽວກັບບົດຮຽນໃນການສ້າງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ X, ວຽກງານທີ່ຢູ່ອາໄສທີ່ຕິດພັນກັບການສ້າງຮ່າງກົດໝາຍວ່າດ້ວຍທີ່ຢູ່ອາໄສ (ສ້າງໃໝ່), ຮ່າງຍຸດທະສາດການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳຮອດປີ 2030 ແລະ ວິໄສທັດຮອດປີ 2040, ການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດແຫ່ງຊາດໃນໄລຍະຜ່ານມາ.

ຜູ້ແທນກອງປະຊຸມ ໄດ້ຮັບຟັງການນຳສະເໜີບົດຮຽນໃນການຈັດຕັ້ງປະຕິບັດວຽກງານທີ່ພົວພັນກັບເນື້ອໃນທີ່ກ່ຽວຂ້ອງເປັນຈຳນວນກວ່າ 20 ບົດ ຈາກບັນດາຊ່ຽວຊານທັງພາຍໃນ ແລະ ຕ່າງປະເທດຜູ້ທີ່ມີປະສົບປະການຫຼາຍ ເພື່ອເປັນການສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງ ສສຊ ຕໍ່ກັບວຽກງານດັ່ງກ່າວ; ພ້ອມດຽວກັນນັ້ນ, ຍັງໄດ້ຮັບຟັງລາຍງານເຫດຜົນ ແລະ ຄວາມຈຳເປັນຂອງການສ້າງ ແລະ ປັບປຸງບັນດາກົດໝາຍ, ນິຕິກຳໃຕ້ກົດໝາຍ ຈາກຂະແໜງການທີ່ພົວພັນເຖິງວຽກງານເສດຖະກິດ, ແຜນການ-ການເງິນ, ກວດສອບ ແລະວັດທະນະທຳ-ສັງຄົມທີ່ຈະສະເໜີເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫງຊາດຊຸດທີ IX.

ຕະຫຼອດໄລຍະດຳເນີນກອງປະຊຸມ, ບັນດາທ່ານທີ່ເຂົ້າຮ່ວມໄດ້ເອົາໃຈໃສ່ເກັບກຳຂໍ້ມູນ ແລະແລກປ່ຽນຄຳຄິດເຫັນ ໂດຍໄດ້ຍົກບັນຫາຂຶ້ນມາສົນທະນາ ແລກປ່ຽນບົດຮຽນນຳວິທະຍາກອນທັງພາຍໃນ ແລະ ຕ່າງປະເທດ ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈໃຫ້ເລິກເຊິ່ງ ເພື່ອນຳບົດຮຽນດັ່ງກ່າວໄປໝູນໃຊ້ເຂົ້າໃນການພິຈາລະນາບັນດາເນື້ອໃນທີ່ຈະນຳເຂົ້າຜ່ານໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ທີ່ຈະໄຂຂຶ້ນໃນມໍ່ໆນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

**(ນາງ ອາລິນ ສຸພົມມະປະດິດ)**

# ກອງປະຊຸມໃຫຍ່ຄັ້ງທີ II ໜ່ວຍກຳມະບານຮາກຖານ ກບຜ



(ສພຊ) - ກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍກຳມະບານຮາກຖານກຳມາທິການບັນດາເຜົ່າ (ກບຜ) ໄດ້ດຳເນີນໃນຕອນເຊົ້າວັນທີ 12 ພະຈິກ 2024 ໂດຍການເປັນປະທານຂອງສະຫາຍ ສິງ ເລືອງວິຫານ ປະທານກຳມະບານຮາກຖານກຳມາທິການບັນດາເຜົ່າ; ເຂົ້າຮ່ວມມີສະຫາຍ ແກ້ວຈະເລີນ ເຊຍຢັ້ງຢ່າງ ຮອງເລຂາໜ່ວຍພັກຮາກຖານກຳມາທິການບັນດາເຜົ່າ, ສະຫາຍ ສີສຸວັນ ສົມເພັດ ຕາງໜ້າຄະນະບໍລິຫານງານສະຫະພັນກຳມະບານສະພາແຫ່ງຊາດ, ບັນດາສະຫາຍຈາກໜ່ວຍກຳມະບານຮາກຖານພາຍໃນສະພາແຫ່ງຊາດ ລວມຜູ້ເຂົ້າຮ່ວມທັງໝົດ 35 ສະຫາຍ, ຍິງ 18 ສະຫາຍ.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການເມືອງຂອງໜ່ວຍກຳມະບານຮາກຖານກຳມາທິການບັນດາເຜົ່າ ເຊິ່ງປະກອບມີສອງພາກຄື: ພາກທີ 1 ຕີລາຄາສະພາບການເຄື່ອນໄຫວວຽກງານໃນໄລຍະ 5 ປີຜ່ານມາ (2019-2024) ໃນນັ້ນ ໄດ້ຍົກໃຫ້ເຫັນຜົນງານດ້ານດີຫຼາຍດ້ານທີ່ສາມາດຍາດມາໄດ້ ພ້ອມທັງຍົກໃຫ້ເຫັນບາງຂໍ້ຄົງຄ້າງ ແລະ ບັນດາສາເຫດທີ່ຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານດີຂຶ້ນໃນຕໍ່ໜ້າ, ພາກທີ 2 ທິດທາງແຜນການເຄື່ອນໄຫວວຽກງານໃນໄລຍະ 5 ປີຕໍ່ໜ້າ (2025-2029) ໃນນັ້ນບັນຫາສຳຄັນຕົ້ນຕໍແມ່ນເພີ່ມທະວີການສຶກສາອົບຮົມແນວຄິດໃຫ້ແກ່ສະມາຊິກກຳມະບານພາຍໃນໜ່ວຍ ຕິດພັນກັບການເປັນເສນາທິການທີ່ດີໃຫ້ແກ່ໜ່ວຍພັກຮາກຖານ ໄປພ້ອມກັບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າ ແລະ ແຜນການທີ່ວາງໄວ້ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນກວ່າເກົ່າ; ກອງປະຊຸມຍັງໄດ້ຮັບຟັງການຜ່ານບົດສຳຫຼວດການນຳພາຂອງໜ່ວຍກຳມະບານຮາກຖານ ກບຜ ກ່ຽວກັບການຊີ້ນຳ-ນຳພາຕໍ່ວຽກງານກຳມະບານຕະຫຼອດໄລຍະ 5 ປີຜ່ານມາ ເຊິ່ງຍົກໃຫ້ເຫັນດ້ານດີຜົນງານ, ດ້ານອ່ອນຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ຈຳນວນໜຶ່ງ ທີ່ຄະນະໜ່ວຍກຳມະບານຮາກຖານຊຸດໃໝ່ ຈະຕ້ອງໄດ້ນຳໄປເປັນແນວທາງ, ບົດຮຽນໃນການສືບຕໍ່ປັບປຸງແກ້ໄຂ ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານກໍຄືຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍກຳມະບານຮາກຖານກຳມາທິການບັນດາເຜົ່າ ໃຫ້ບັນລຸຕາມແຜນການ ແລະຄາດໝາຍທີ່ວາງໄວ້.

ຜູ້ແທນກອງປະຊຸມ 25 ສະຫາຍ ເປັນຍິງ 12 ສະຫາຍ ໄດ້ໃຊ້ສິດຂອງຕົນປ່ອນບັດຄັດເລືອກເອົາຄະນະໜ່ວຍກຳມະບານຮາກຖານກຳມາທິການບັນດາເຜົ່າຊຸດໃໝ່ ເຊິ່ງປະກອບດ້ວຍຜູ້ທີ່ມີມາດຕະຖານ, ເງື່ອນໄຂຄົບຖ້ວນ 5 ສະຫາຍ, ຍິງ 2 ສະຫາຍ ໂດຍເລືອກເອົາສະຫາຍ ສົມໝາຍ ສຸນາເຄນ ເປັນປະທານກຳມະບານຮາກຖານ, ສະຫາຍ ຄຳສອນ ຊົງຊົວຕົງ ເປັນຮອງປະທານ ແລະ ເປັນປະທານກວດກາ, ສະຫາຍ ນາງ ມະນີວັນ ທ່າວເຈີຈົງ ເປັນຄະນະແລະເປັນຮອງປະທານກວດກາ, ສະຫາຍ ທິນູ ແກ້ວມີໄຊ ເປັນກຳມະການ ແລະ ເປັນຫົວໜ້າຈຸກົມວຽກງານສາສະໜາ, ສະຫາຍ ນາງ ໄມລີ ປາກາສິດ ເປັນກຳມະການແລະເປັນຫົວໜ້າຈຸກົມວຽກງານຊົນເຜົ່າ.

ສະຫາຍ ແກ້ວຈະເລີນ ເຊຍຢັ້ງຢ່າງ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດໃນການເຄື່ອນໄຫວ ແລະ ຈັດຕັ້ງປະຕິບັດວຽກງານຂອງໜ່ວຍກຳມະບານຮາກຖານກຳມາທິການບັນດາເຜົ່າທີ່ສາມາດຍາດມາໄດ້ໃນໄລຍະ 5 ປີ ຜ່ານມາ ພ້ອມທັງເນັ້ນໜັກໃຫ້ເພີ່ມທະວີເອົາໃຈໃສ່ສືບຕໍ່ກໍ່ສ້າງ, ສ່ອງແສງຕຳນິ-ສິ່ງຂ່າວ ແລະ ປົກປ້ອງສິດຜົນປະໂຫຍດຂອງສະມາຊິກພາຍໃນໜ່ວຍ ໃຫ້ກາຍເປັນພະນັກງານສືບທອດປ່ຽນແທນໃນຕໍ່ໜ້າ ພ້ອມທັງຍົກສູງຄວາມຮູ້, ຄວາມສາມາດທາງດ້ານວິຊາສະເພາະ, ເຕັກໂນໂລຊີ ແລະ ພາສາຕ່າງປະເທດ ເພື່ອຮັບປະກັນການເປັນເສນາທິການທີ່ດີໃຫ້ແກ່ກຳມາທິການ ກໍຄືສະພາແຫ່ງຊາດ; ປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າຂອງກຳມະບານ ດ້ວຍຄວາມຮັບຜິດຊອບສູງ, ໃຫ້ມີຜົນສຳເລັດຕາມຄາດໝາຍ; ເຕົ້າໂຮມຄວາມສາມັກຄີພາຍໃນ, ຊຸກຍູ້ສະມາຊິກກຳມະບານພາຍໃນໜ່ວຍປະກອບສ່ວນ ແລະ ເຂົ້າຮ່ວມກິດຈະກຳລວມຕ່າງໆຂອງອົງການຈັດຕັ້ງຢ່າງຫ້າວຫັນ ແລະ ເປັນຂະບວນການ.

**(ນາງ ອາລິນ ສຸພົມມະປະດິດ)**




## ຫາລື...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 11 ພະຈິກນີ້ ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ໂດຍການເປັນປະທານຮ່ວມຂອງທ່ານປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ ແລະ ທ່ານ ປອ. ສິນລະວົງ ຄຸດໄພທູນ ກຳມະການກົມການເມືອງສູນກາງພັກ, ປະທານສູນກາງແນວລາວສ້າງຊາດ; ເຂົ້າຮ່ວມມີບັນດາທ່ານຮອງປະທານ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານສູນກາງສະຫະພັນກຳມະບານລາວ, ປະທານສູນກາງສະຫະພັນແມ່ຍິງລາວ, ເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ຮອງປະທານສະຫະພັນນັກຮົບເກົ່າແຫ່ງຊາດລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ຈຸດປະສົງແມ່ນເພື່ອປຶກສາຫາລືແລະຮ່ວມກັນຊອກຫາວິທີແກ້ໄຂບັນຫາເຄັ່ງຮ້ອນຮີບດ່ວນທີ່ເກີດຂຶ້ນໃນສັງຄົມແລະສິ່ງຜົນກະທົບຕໍ່ການສ້າງສາພັດທະນາເສດຖະກິດ-ສັງຄົມ, ຊີວິດການເປັນຢູ່ຂອງປະຊາຊົນ; ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນແລະກົດໝາຍຂອງບັນດາອົງການລັດຂັ້ນຕ່າງໆ ທັງເປັນການສ້າງຄວາມເປັນເອກະພາບລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວແລະອົງການຈັດຕັ້ງມະຫາຊົນຂັ້ນສູນກາງໃນການແກ້ໄຂບັນຫາຕ່າງໆໃຫ້ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ ແລະ ກົດໝາຍ.

ກອງປະຊຸມໄດ້ຮັບຟັງການສະເໜີຜົນການຕິດຕາມກວດກາຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການແກ້ໄຂຜົນກະທົບຈາກໂຄງການການພັດທະນາໄລຍະຜ່ານມາ; ນອກຈາກນັ້ນ, ຍັງໄດ້ມີການສົນທະນາແລກປ່ຽນການປະກອບຄຳເຫັນຕໍ່ກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ; ປະກອບບາງຄຳເຫັນໃສ່ສິດ ແລະ ໜ້າທີ່ທີ່ໄດ້ກຳນົດໃນກົດໝາຍຂອງອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນໃນການຕິດຕາມກວດກາການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ; ປະກອບຄຳເຫັນກ່ຽວກັບການປັບປຸງມາດຕາທີ່ກ່ຽວຂ້ອງຂອງລັດຖະທຳມະນູນ ຕາມທິດຍົກສູງຄຸນນະພາບການຕິດຕາມກວດກາຂອງອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແລະອົງການຈັດຕັ້ງມະຫາຊົນ.

**(ນາງ ກຸກກິກ ບຸດດາໄຊ)**



## ກອງປະຊຸມ ...

(ຕໍ່ຈາກໜ້າ 1)

ອົງການໄອຍະການປະຊາຊົນສູງສຸດ; ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວແລະອົງການຈັດຕັ້ງມະຫາຊົນຂັ້ນສູນກາງ; ບົດລາຍງານຜົນກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍ ຈຳນວນ9ສະບັບທີ່ຈະນຳເຂົ້າພິຈາລະນາຮັບຮອງຢູ່ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX; ບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດຕາມມະຕິສະພາແຫ່ງຊາດ; ບົດລາຍງານການແຕ່ງຕັ້ງ, ຍົກຍ້າຍບຸຄະລາກອນຂອງສານປະຊາຊົນ; ບົດລາຍງານການພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຈຳນວນ 02 ສະບັບ; ບົດລາຍງານຜົນສຳເລັດການເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 45 ແລະ ການຕ້ອນຮັບການຢ້ຽມຢາມພົບປະສອງຝ່າຍຂອງຄະນະຜູ້ແທນຕ່າງປະເທດ; ບົດລາຍງານຜົນສຳເລັດການຕ້ອນຮັບຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດອຳນາດປະຊາຊົນ ສ.ກູບາ; ບົດລາຍງານການຄົ້ນຄວ້າໜັງສືສະເໜີຂອງລັດຖະບານທີ່ກ່ຽວຂ້ອງກັບໂຄງການລົງທຶນຕ່າງໆ ຈຳນວນ 6 ເລື່ອງ ຄື: ການຂໍຍົກເວັ້ນການປະຕິບັດບາງມາດຕາຂອງກົດໝາຍ ແລະ ອັດຕາພາສີສົ່ງອອກຂອງໂຄງການຂຸດຄົ້ນ-ປຸງແຕ່ງແຮ່ບົກຊິດ ແລະ ກໍ່ສ້າງໂຮງງານຜະລິດແຮ່ອາລູມິນາຢູ່ແຂວງເຊກອງ; ການສະເໜີຂໍນະໂຍບາຍສົ່ງເສີມພາສີ-ອາກອນສຳລັບຜະລິດຕະພັນຝຸ່ນໂປຕາສ ຢູ່ແຂວງຄຳມ່ວນ; ການຂໍດັດແກ້ເພີ່ມມູນຄ່າໂຄງການກໍ່ສ້າງ ທີ່ເປັນໂຄງການລົງທຶນຂອງລັດ ຈຳນວນ 4 ໂຄງການ ຢູ່ແຂວງເຊກອງ; ການຂໍຫັນປ່ຽນທີ່ດິນປ່າໄມ້ທຳມະຊາດ ໄປເປັນທີ່ດິນອຸດສາຫະກຳ ເພື່ອນຳໃຊ້ເຂົ້າໃນໂຄງການຂຸດຄົ້ນແລະປຸງແຕ່ງແຮ່ຄຳ, ແຮ່ທອງ ແລະ ແຮ່ຕິດພັນ ຢູ່ແຂວງຊຽງຂວາງ; ການສະເໜີຂໍຫັນປ່ຽນທີ່ດິນກະສິກຳ ເປັນທີ່ດິນອຸດສາຫະກຳເພື່ອຮັບໃຊ້ເຂົ້າໃນໂຄງການເຂື່ອນໄຟຟ້າພະລັງງານນ້ຳຂອງປາກແບງ; ການຂໍຫັນປ່ຽນປະເພດດິນຂອງໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຂອງປາກລາຍ; ບົດລາຍງານຮ່າງຍຸດທະສາດການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳຮອດປີ2030 ແລະ ວິໄສທັດຮອດປີ 2040; ບົດລາຍງານການກະກຽມບັນດາເນື້ອໃນເອກະສານທີ່ຈະນຳເຂົ້າພິຈາລະນາຢູ່ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ເປັນຕົ້ນ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ; ບົດລາຍງານການສະເໜີຂໍຍົກເວັ້ນບາງມາດຕາຂອງກົດໝາຍວ່າດ້ວຍທະນາຄານແຫ່ງ ສປປລາວ ເພື່ອໃຫ້ທະນາຄານ ແຫ່ງ ສປປລາວ ສາມາດລົງທຶນສ້າງນິຕິບຸກຄົນໃນຕະຫຼາດແລກປ່ຽນເງິນຕາຕ່າງປະເທດ; ບົດລາຍງານຂໍທິດຊີ້ນຳກ່ຽວກັບການທົບທວນຄືນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຄວບຄຸມຢາສູບ ແລະ ສັນຍາການລົງທຶນໃນກິດຈະການຢາສູບ ລະຫວ່າງລັດຖະບານແຫ່ງ ສປປລາວ ກັບ ກຸ່ມບໍລິສັດຢາສູບອິມພີຣຽວ; ບົດລາຍງານຜົນການຄົ້ນຄວ້າການສະເໜີຂອງລັດຖະບານ ກ່ຽວກັບຮ່າງດຳລັດວ່າດ້ວຍນິຄົມອຸດສາຫະກຳ; ບົດລາຍງານແຜນການລົງທຶນຂອງລັດ ປະຈຳປີ 2025.

**(ນາງ ກຸກກິກ ບຸດດາໄຊ)**



## ປະທານ...

(ຕໍ່ຈາກໜ້າ 1)

(ສພຊ) - ຕອນບ່າຍວັນອັງຄານທີ 12 ພະຈິກຜ່ານມາ ທີ່ສະພາແຫ່ງຊາດ, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ພົບປະກັບທ່ານ ລູໂບເມຍ ອັນດຣາສຊີ (L’ubomir Andrassy) ປະທານອົງການກວດສອບແຫ່ງລັດ ສ.ສະໂລວັກ ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ ລະຫວ່າງວັນທີ 11-14 ພະຈິກ 2024.

ໃນໂອກາດນີ້, ທ່ານປະທານສະພາແຫ່ງຊາດ ໄດ້ສະແດງຄວາມຍິນດີຕ້ອນຮັບແລະຕີລາຄາສູງຕໍ່ການຢ້ຽມຢາມສປປລາວຂອງທ່ານ ລູໂບເມຍ ອັນດຣາສຊີແລະຄະນະເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີລະຫວ່າງສອງປະເທດ, ເວົ້າສະເພາະແມ່ນສອງອົງການກວດສອບ ໂດຍສອງຝ່າຍໄດ້ມີການແລກປ່ຽນບົດຮຽນ ພ້ອມທັງປຶກສາຫາລືກ່ຽວກັບການຮ່ວມມືໃນຕໍ່ໜ້າລະຫວ່າງສອງອົງການກວດສອບແຫ່ງລັດ ສປປລາວ ແລະສ.ສະໂລວັກເຊິ່ງເປັນການປະກອບສ່ວນສະໜັບສະໜູນອົງການກວດສອບແຫ່ງລັດ ສປປລາວ ໃຫ້ມີຄວາມເຂັ້ມແຂງຍິ່ງໆຂຶ້ນ; ທ່ານ ປອ. ໄຊສົມພອນ ພົມວິຫານ ຍັງໄດ້ແຈ້ງສະພາບການທີ່ພົ້ນເດັ່ນຂອງປະເທດ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດລາວ ຊຸດທີ IX ໂດຍຫຍໍ້ໃຫ້ຮັບຊາບອີກດ້ວຍ.

ທ່ານ ລູໂບເມຍ ອັນດຣາສຊີ ໄດ້ສະແດງຄວາມຂອບໃຈຢ່າງສູງຕໍ່ການຕ້ອນຮັບອັນອົບອຸ່ນຂອງປະທານສະພາແຫ່ງຊາດ ພ້ອມທັງແຈ້ງສະພາບການທີ່ພົ້ນເດັ່ນຂອງປະເທດສະໂລວັກ ແລະ ລາຍງານໂດຍຫຍໍ້ການຮ່ວມມືກັບອົງການກວດສອບແຫ່ງລັດ ສປປລາວ ໃນໄລຍະຜ່ານມາ ເຊິ່ງການມາເຄື່ອນໄຫວວຽກງານທາງການຄັ້ງນີ້, ນອກຈາກພົບປະສອງຝ່າຍແລ້ວ, ຍັງມີກອງປະຊຸມແລກປ່ຽນບົດຮຽນໃນ 2 ຫົວຂໍ້: ການພັດທະນາດ້ານບຸຄະລາກອນແລະການຈັດຕັ້ງປະຕິບັດຄຳແນະນຳການກວດສອບ.

ສປປລາວ ແລະ ສ.ສະໂລວັກ ໄດ້ສ້າງຕັ້ງສາຍພົວພັນການທູດນຳກັນ ໃນວັນທີ 05 ກັນຍາ 1962.

**(ອານຸສອນ ພູມມີທອນ)**



## ກຜສງ...

(ຕໍ່ຈາກໜ້າ 2)

ຈັດຕັ້ງປະຕິບັດຕາມວິໄສທັດ, ຍຸດທະສາດ ແລະ ຂອບແຜນການ 5 ປີ ຂອງສະພາແຫ່ງຊາດຊຸດທີ IX.

ກອງປະຊຸມໄດ້ຮັບຟັງບົດສະຫຼຸບການເຄື່ອນໄຫວວຽກງານປີ 2024 ແລະ ທິດທາງແຜນການປີ2025ຂອງກຳມາທິການ ແລະ ການພິຈາລະນາຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ, ແຜນກວດສອບແລະແຜນກວດກາ; ພ້ອມກັນນັ້ນ, ກໍໄດ້ຮັບຟັງການລາຍງານບັນຫາສຳຄັນຂອງຊາດ ທີ່ລັດຖະບານໄດ້ຈັດຕັ້ງປະຕິບັດຜ່ານມາຕາມມະຕິຂອງສະພາແຫ່ງຊາດເຊິ່ງລາຍງານໂດຍກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ທະນາຄານ ແຫ່ງ ສປປລາວ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າ, ສົນທະນາແລກປ່ຽນຄຳຄິດຄຳເຫັນຢ່າງເລິກເຊິ່ງ ແລະກວ້າງຂວາງ ເພື່ອຊອກໃຫ້ເຫັນສາເຫດທີ່ເກີດຂຶ້ນຕົວຈິງທັງດ້ານດີ ແລະ ຂໍ້ຄົງຄ້າງ ເພື່ອຄົ້ນຄວ້ານຳສະເໜີວິທີແກ້ໄຂໃຫ້ສາມາດປະຕິບັດໄດ້ໃນສະເພາະໜ້າ ແລະ ຍາວນານ ເພື່ອຮັບປະກັນໃຫ້ແກ່ການລົງທຶນພັດທະນາທີ່ຍືນຍົງ ແລະຄວາມມີສະຖຽນລະພາບທາງດ້ານການເງິນໃຫ້ໝັ້ນຄົງ.

**(ນາງ ອາລິນ ສຸພົມມະປະດິດ)**




# ຮູ້ຈັກບຸນທາດຫຼວງ...?

**# ດົ້ນກົບເມກ**

ໃກ້ຈະຮອດເດືອນ 12 ເພັງ ພະຈັນເຕັມດວງ ກໍຄືໃກ້ຮອດບຸນພະທາດຫຼວງ, ການທີ່ຄົນລາວບູຮານຖືປະຕິທິນຕາມຈັນທະລະຄະຕິ ກໍອີງໃສ່ແສງຂອງດວງຈັນສອດສ່ອງໄປມາໃຫ້ເຫັນແຈ້ງໃນອະດີດ ຕ່າງປັດຈຸບັນມີໄຟຟ້າແຕ່ກ່ອນໃຊ້ແສງທຽນ, ແສງຈັນ, ບຸນທາດຫຼວງເປັນປາງບຸນໃຫຍ່ສຳຄັນຕໍ່ຊາດແລະຮີດຄອງປະເພນີ ເພາະສາມາດໃຊ້ເປັນເວທີສົ່ງເສີມສິລະປະວັນນະຄະດີ ສົ່ງເສີມສິນຄ້າລາວ, ສິນຄ້າພື້ນເມືອງ ແລະ ຮີດຄອງປະເພນີ ການນຸ່ງຖືເສື້ອຜ້າອາພອນ ພ້ອມນີ້, ບຸນທາດຫຼວງຍັງມີຄວາມສຳຄັນຕໍ່ການສ້າງຄວາມສາມັກຄີຂອງປະຊາຊົນທົ່ວປະເທດ.

ບຸນທາດຫຼວງປີນີ້ ອາດຈະມີການສົ່ງເສີມການທ່ອງທ່ຽວທີ່ມີຫຼາຍຮູບແບບເຊັ່ນ: ສະຖານທີ່ທຳມະຊາດ ທ່ອງທ່ຽວດ້ານປະຫວັດສາດ-ວັດທະນະທຳ... ສຳຄັນຄິດວ່າຂໍ້ມູນ-ຂ່າວສານ ການໂຄສະນາໃຫ້ແຂກມາທ່ຽວບຸນໄດ້ຮັບຮູ້, ຄວນມີເວທີຫຼາກຫຼາຍເຜີຍແຜ່ຂໍ້ມູນ ແລະ ສະແດງຄວາມຄິດເຫັນ ເຊິ່ງອາດລວມໄປເຖິງການມີເວທີແຂ່ງຂັນໃຫ້ເຍົາວະຊົນ ແລະ ຜູ້ໃຫຍ່ ເຊີດຊູສົ່ງເສີມທັງວັດທະນະທຳ ແລະ ການສຶກສາໄປພ້ອມກັນ ອີງໃສ່ທາງສຽງ ແລະ ບົດຮຽນບາງອັນໃນປີຜ່ານໆມາ ກໍແມ່ນເລື່ອງລະບຽບ ແລະ ຄວາມສະອາດ. ຂີ້ເຫຍື້ອມີການຖິ້ມໃສ່ຖົງໄວ້ຫຼາຍບ່ອນ ຊ່ວຍກັນໂຄສະນາເລື່ອງຄວາມສະອາດ ສ້າງຄວາມປະທັບໃຈດ້ານການທ່ອງທ່ຽວ, ການຈັດສັນບ່ອນຂາຍສິນຄ້າ ແລະ ການໃຊ້ເຄື່ອງສຽງນີ້ ຮູ້ສຶກວ່າສັບສົນໜວກຫູ ຫຼາຍອັນກໍບໍ່ຄວນໃຫ້ໃຊ້ເຄື່ອງສຽງໂຄສະນາສິນຄ້າ ແຕ່ກໍມີຫຼາຍອັນເຊັ່ນກັນ ກໍຕ້ອງໄດ້ໃຊ້ເຄື່ອງສຽງໂຄສະນາ.

ຫາກເວົ້າເຖິງຄວາມເປັນລະບຽບ-ສະຫງົບປອດໄພ ກໍອີງໃສ່ເຈົ້າໜ້າທີ່ກວດກາເຂັ້ມງວດ-ສອດສ່ອງເບິ່ງພຶດຕິກຳບາງຄົນມາທ່ຽວບຸນ ຜູ້ບໍ່ຫວັງດີກໍອາດຈະມີ ເຊິ່ງອາດປອມແປງເຂົ້າມາໃນຫຼາຍອາຊີບ ເວົ້າໃຫ້ໝົດທັງນັກບວດ ພຸ້ນເນີ ເພາະຄວາມຈົບງາມເປັນລະບຽບມັນກໍແມ່ນໜ້າຕາຂອງຊາດ ໃຫ້ລືມວ່າເປັນບຸນປະເພນີສືບທອດມາຍາວນານເຖິງຢ່າງໃດກໍຕາມບຸນຄືບຸນ ແຕ່ຖ້າຫາກຮັກສາລະບຽບຈົບງາມໄດ້ ກໍຂຶ້ນກັບການຄຸ້ມຄອງນໍ! ສະເໜີແລກປ່ຽນ.












## ຍົກສູງ...

(ຕໍ່ຈາກໜ້າ 1)

ປຶກສາຫາລືແລກປ່ຽນຂໍ້ມູນເຊິ່ງກັນ ແລະ ກັນ ແນໃສ່ເຮັດໃຫ້ຜູ້ແທນກອງປະຊຸມສາມາດກຳແໜ້ນບັນຫາສຳຄັນ, ສ້າງຄວາມເຂົ້າໃຈຢ່າງເລິກເຊິ່ງ, ເປັນເອກະພາບທາງດ້ານເນື້ອໃນແລະທັດສະນະ ເພື່ອປະກອບຂໍ້ມູນຕ່າງໆ ສະດວກໃຫ້ແກ່ການປະກອບຄຳເຫັນ, ພິຈາລະນາຮັບຮອງເອກະສານຕ່າງໆຢູ່ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ໃຫ້ມີປະສິດທິຜົນນັບມື້ສູງຂຶ້ນ. ທ່ານຮອງປະທານສະພາແຫ່ງຊາດ ໄດ້ຮຽກຮ້ອງບັນດາທ່ານສະມາຊິກສະພາແຫ່ງຊາດ, ຄະນະຮັບຜິດຊອບເນື້ອໃນຂົງເຂດລັດຖະບານ, ຄະນະຮັບຜິດຊອບຮ່າງກົດໝາຍແລະພາກສ່ວນທີ່ກ່ຽວຂ້ອງ ຈົ່ງເອົາໃຈໃສ່ເຂົ້າຮ່ວມ, ຕິດຕາມຢ່າງຕໍ່ເນື່ອງເປັນປົກກະຕິ ແລະ ເຊີດຊູຄວາມຮັບຜິດຊອບການເມືອງຂອງຕົນສຸມສະຕິປັນຍາເຂົ້າໃນການປະກອບຄວາມຄິດເຫັນຢ່າງສ້າງສັນ, ກົງໄປກົງມາ, ຍົກໃຫ້ເຫັນສະພາບການຕົວຈິງ ແລະ ຮ່ວມກັນຄົ້ນຄວ້າຊອກຫາວິທີການແກ້ໄຂຕໍ່ບັນຫາຄວາມຫຍຸ້ງຍາກທີ່ເກີດຂຶ້ນ ໃຫ້ມີຄວາມເປັນເອກະພາບ ເພື່ອສາມາດຮັບປະກັນ ແລະ ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ສອດຄ່ອງກັບສິດແລະໜ້າທີ່ຂອງສະມາຊິກສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ, ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມໃນໄລຍະໃໝ່; ທ່ານຍັງໄດ້ຮຽກຮ້ອງກອງເລຂາກອງປະຊຸມແລະຜູ້ຕິດຕາມກອງປະຊຸມຈາກກະຊວງ, ອົງການ ໃຫ້ເອົາໃຈໃສ່ສັງລວມຄຳເຫັນ, ຄຳເຈາະຈີ້ມ ຫຼື ຄຳຊັກຖາມ ຂອງຜູ້ແທນກອງປະຊຸມ ເພື່ອເປັນພື້ນຖານໃນການນຳເອົາຂໍ້ມູນ ແລະ ຄຳເຫັນຂອງບັນດາທ່ານ ສສຊ ໃນການປຶກສາຫາລືຄັ້ງນີ້ ນຳໄປປັບປຸງໃຫ້ເອກະສານຕ່າງໆມີຄວາມສົມບູນ ກ່ອນນຳເຂົ້າພິຈາລະນາ, ຮັບຮອງຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX.

ຜູ້ແທນກອງປະຊຸມ ຈະໄດ້ສຸມໃສ່ຄົ້ນຄວ້າ, ປະກອບຄຳຄິດຄຳເຫັນ ແລະ ສ້າງຄວາມເຂົ້າໃຈຕໍ່ບັນດາເນື້ອໃນຕ່າງໆ ເຊິ່ງມີ 2 ກຸ່ມວຽກຕົ້ນຕໍຄື: ວຽກງານລັດຖະບານ ມີບົດລາຍງານຂອງກະຊວງແຜນການ ແລະການລົງທຶນ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2024 ແລະ ແຜນການປະຈຳປີ 2025, ແຜນການລົງທຶນຂອງລັດ ປະຈຳປີ 2025; ບົດລາຍງານຂອງກະຊວງການເງິນ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2024 ແລະ ແຜນການ ປະຈຳປີ 2025, ການດັດແກ້ແຜນງົບປະມານແຫ່ງລັດ, ແຜນຈັດສັນງົບປະມານແຫ່ງລັດໃຫ້ກະຊວງ-ອົງການ ແລະທ້ອງຖິ່ນ ປະຈຳປີ 2025; ບົດລາຍງານຂອງທະນາຄານແຫ່ງ ສປປ ລາວ ກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາປະຈຳປີ 2024 ແລະແຜນການປະຈຳປີ 2025; ບົດລາຍງານຂອງກະຊວງກະສິກຳ ແລະ ປ່າໄມ້ ກ່ຽວກັບຮ່າງຍຸດທະສາດການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳຮອດປີ 2030 ແລະ ວິໄສທັດຮອດປີ 2040; ພິຈາລະນາວຽກງານສ້າງ ແລະ ປັບປຸງກົດໝາຍ ຈຳນວນ 4 ສະບັບ ໃນນີ້, ຮ່າງກົດໝາຍສ້າງໃໝ່ 2 ສະບັບຄື: ກົດໝາຍວ່າດ້ວຍທີ່ຢູ່ອາໄສ ແລະ ກົດໝາຍວ່າດ້ວຍພັດທະນາສີມືແຮງງານ, ກົດໝາຍປັບປຸງ 2 ສະບັບຄື: ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປລາວ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ.

**(ສອນສັກ ວັນວິໄຊ)**




# ວິທີເຮັດວຽກ

**ພາກທີ 6**
**ວິທີນຳ**

2. ຕ້ອງເຊື່ອປະຊາຊົນ, ຕ້ອງເອົາທຸກບັນຫາໄປໃຫ້ປະຊາຊົນຖົກຖຽງກັນ ແລະ ຊອກວິທີແກ້ໄຂ. ເມື່ອເຫັນວ່າພວກເຮົາມີຂໍ້ບົກພ່ອງ ກໍຕ້ອງຈິງໃຈສາລະພາບຕໍ່ປະຊາຊົນ. ມະຕິຕົກລົງອັນໃດທີ່ປະຊາຊົນເຫັນວ່າບໍ່ເໝາະສົມ ກໍຕ້ອງປ່ອຍໃຫ້ເຂົາເຈົ້າສະເໜີວິທີແກ້ໄຂ. ຕ້ອງອີງໃສ່ຄຳເຫັນຂອງປະຊາຊົນ ເພື່ອແກ້ໄຂດັດແປງພະນັກງານ ແລະ ການຈັດຕັ້ງຂອງພວກເຮົາ.

3. ຢ່າດື້ດ້ານຖືເອົາແຕ່ຕາມແນວເກົ່າທີ່ຄົນເຄີຍເຮັດ ແລະ ເຄີຍເວົ້າ. ຕ້ອງເອົາຕາມສະຖານະການຕົວຈິງຂອງປະຊາຊົນແຕ່ລະທ້ອງຖິ່ນ, ແຕ່ລະເວລາ, ອາໄສເອົາຕາມລະດັບຄວາມຕື່ນຕົວຂອງປະຊາຊົນ, ອາໄສເອົາຕາມຄວາມສະໝັກໃຈຂອງປະຊາຊົນ, ເພື່ອຈັດຕັ້ງເຂົາເຈົ້າ ແລະ ອາໄສເອົາຕາມສະພາບແວດລ້ອມຕົວຈິງໃນແຕ່ລະທ້ອງຖິ່ນ, ແຕ່ລະເວລາເພື່ອນຳພາເຂົາເຈົ້າຕໍ່ສູ້.

ອ່ານຕໍ່ສະບັບໜ້າ...





## ຄະນະປະຈຳ...

(ຕໍ່ຈາກໜ້າ 1)

ສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ; ມີທ່ານ ປອ. ນາງວຽງທອງ ສີພັນດອນ ເລຂາທິການສູນກາງພັກ, ປະທານສານປະຊາຊົນສູງສຸດ, ທ່ານຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງປະທານອົງການກວດກາແຫ່ງລັດ, ຮອງຫົວໜ້າກົມໃຫຍ່ຕຳຫຼວດ ກະຊວງປ້ອງກັນຄວາມສະຫງົບ ແລະ ແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງແມ່ນເພື່ອສ້າງຄວາມເປັນເອກະພາບລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ໃນການແກ້ໄຂບັນຫາຕ່າງໆໃຫ້ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນແລະກົດໝາຍ; ປຶກສາຫາລື ແລະ ຮ່ວມກັນຊອກຫາວິທີແກ້ໄຂບັນຫາເຄັ່ງຮ້ອນຮີບດ່ວນທີ່ເກີດຂຶ້ນໃນສັງຄົມທີ່ພົວພັນກັບການດຳເນີນຄະດີຕາມຂະບວນການຍຸຕິທຳ, ບັນຫາທີ່ພົວພັນກັບຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນທັງເປັນການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍຂອງບັນດາອົງການລັດຂັ້ນຕ່າງໆ.

ທ່ານ ປອ. ໄຊສົມພອນ ພົມວິຫານ ກ່າວວ່າ: ຕະຫຼອດໄລຍະປີ 2024 ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ໄດ້ມີຄວາມພະຍາຍາມ ແລະ ເປັນເຈົ້າການຈັດຕັ້ງປະຕິບັດພາລະບົດບາດຂອງຕົນໃນການຜັນຂະຫຍາຍມະຕິກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ IX ສະບັບເລກທີ 115 ແລະ 116 ລວມທັງໄດ້ເພີ່ມທະວີປະຕິບັດກົນໄກປະສານງານກ່ຽວກັບການແກ້ໄຂຄຳຮ້ອງຂໍຄວາມເປັນທຳລະຫວ່າງກຳມາທິການຍຸຕິທຳ ກັບສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ; ພ້ອມກັນນັ້ນ, ຍັງໄດ້ເອົາໃຈໃສ່ການພິຈາລະນາຕັດສິນຄະດີ ທັງທາງແພ່ງ ແລະ ທາງອາຍາ ເຮັດໃຫ້ການແກ້ໄຂຂໍ້ຂັດແຍ່ງໃນສັງຄົມ ມີຄວາມເປັນທຳຕາມກົດໝາຍ, ໄດ້ກຳນົດທິດທາງກ່ຽວກັບການສ້າງຄວາມໂປ່ງໃສໃນທຸກຂັ້ນຕອນຂອງການດຳເນີນຄະດີຕາມຂະບວນການຍຸຕິທຳ, ການຕັດສິນ-ພິພາກສາຄະດີໃຫ້ຖືກຕ້ອງຕາມກົດໝາຍແລະຖືກຕາມຄວາມເປັນຈິງ, ສູ້ຊົນຈັດຕັ້ງປະຕິບັດຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ໃຫ້ສິ້ນສຸດຕາມກົດໝາຍ; ການຈັດຕັ້ງປະຕິບັດວຽກງານດຳເນີນຄະດີຕາມຂະບວນຍຸຕິທຳໃນໄລຍະຜ່ານມາ ເຖິງວ່າໄດ້ຮັບຜົນສຳເລັດຫຼາຍດ້ານ ແຕ່ກໍຫຼີກລ່ຽງບໍ່ໄດ້ບາງຂໍ້ຫຍຸ້ງຍາກ, ບາງບັນຫາ ແລະ ສິ່ງທ້າທາຍ. ເພື່ອຍົກສູງຄວາມຮັບຜິດຊອບຕໍ່ສູນກາງພັກ, ສະພາແຫ່ງຊາດ ໃນຖານະເປັນອົງການນິຕິບັນຍັດ ທັງເປັນອົງການຕິດຕາມຊຸກຍູ້ການເຄື່ອນໄຫວຂອງສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ຈຶ່ງໄດ້ດຳເນີນກອງປະຊຸມຮ່ວມຄັ້ງນີ້ເພື່ອປຶກສາຫາລືການແກ້ໄຂບັນຫາຫຍຸ້ງຍາກໃນຕໍ່ໜ້າໃຫ້ມີບາດກ້າວຫັນປ່ຽນທີ່ດີຂຶ້ນ; ບັນດາເນື້ອໃນທີ່ນຳມາພິຈາລະນາ ລ້ວນແຕ່ເປັນວຽກງານທີ່ມີຄວາມສຳຄັນ ຕິດພັນກັບສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າຢ່າງກວ້າງຂວາງ ທັງສອດຄ່ອງກັບກົດໝາຍແລະຄວາມເປັນຈິງ.

ກອງປະຊຸມໄດ້ຮັບຟັງລາຍງານການສະຫຼຸບຕີລາຄາຜົນຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ IX ສະບັບເລກທີ 115/ສພຊ ແລະ 116/ສພຊ, ລົງວັນທີ 21 ພະຈິກ2023ກ່ຽວກັບການເຄື່ອນໄຫວວຽກງານປະຈຳປີ 2024 ຂອງສານປະຊາຊົນສູງສຸດ ແລະ ຂອງອົງການໄອຍະການປະຊາຊົນສູງສຸດ; ກົນໄກການປະສານງານກ່ຽວກັບການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ລະຫວ່າງກຳມາທິການຍຸຕິທຳ ກັບສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ໃນໄລຍະຜ່ານມາມີຂໍ້ສະດວກແລະຂໍ້ຫຍຸ້ງຍາກແນວໃດ. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນເຊີດຊູຄວາມຮັບຜິດຊອບ ແລະ ເອົາໃຈໃສ່ຄົ້ນຄວ້າ, ປະກອບຄຳຄິດເຫັນໃສ່ບັນດາເນື້ອໃນທີ່ນຳມາພິຈາລະນາ ໃຫ້ບັນລຸຜົນສຳເລັດຕາມຄາດໝາຍ ແລະ ສາມາດນຳໄປຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ.

**(ນາງ ອາລິນ ສຸພົມມະປະກິດ)**

## ອາດ ກະວີລາດ

# ພາບ ແລະ ຄວາມຈິງ

**# ແກ້ວຕາວັນ**

❊ ມ່ານໝອກຂາວຫົ່ມຫຸ້ມ
ພາບຖ່າຍເຫັນງາມຕາ
ຕາມສາຍພູເຫວຫ້ວຍ
ຢາກຢ່າງເລາະລຽບຫຼິ້ນ
ຄູມປ່າໄພພະນາ
ດັ່ງອົງອິນປັ້ນ
ສວຍງາມທຸກຢ່າງ
ຕາມເຈື້ອຍຫວ່າງພູ

❊ ຢາກຈະໄປຢູ່ຢັ້ງ
ຢູ່ກັບຊຸມແຊງຊາວ
ຢູ່ບົນດິນແດນເບື້ອງ
ມາຢອກສາວສໍ່ານ້ອຍ
ນອນນັ່ງເອົາແຮງ
ເຜົ່າຊົນຄົນໜ້ອຍ
ເມືອງເໜືອໜາວໝອກ
ຄືງແມ້ງມ່ວນມັນ

❊ ເມື່ອໄດ້ເດີນດຸ່ງດັ້ນ
ຢູ່ພູຜາແສນຂຽວ
ມັນຊ່າງງາມຄືດ້າຍ
ມວນໝອກໂລມລູບໄລ້
ມາມົ່ນມອຍດູ
ທ່ຽວຈໍລະຈອນດັ້ນ
ເຮົາເຫັນໃນຮູບ
ໃຈຂ້ອຍຊື່ນບານ

❊ ຮຽມລອງເລາະລຽບບ້ານ
ງອຍຢູ່ເທິງພູເຂົາ
ມີຫຼັງຄາມຸງຫຍ້າ
ມີຫຼາຍຮູປ່ອງແປ້ວ
ຊົນເຜົ່າພູດອຍ
ຢຽດຍາວແຄມຫ້ວຍ
ທາງຝາເຕີມຕາບ
ເຫັນແລ້ວຄິດອີດູ

❊ ຊຸມເດັກເຂົານຸ່ງເສື້ອ
ໄປໂຮງຮຽນທັງໜາວ
ຮຽມເຫັນບາງຄົນນັ້ນ
ຢູ່ແຕ່ເຮືອນເບິ່ງນ້ອງ
ຜືນເກົ່າບາງໆ
ສັ່ນເຊັນຈົນສະບັ້ນ
ຝັງໄຟນຳແມ່
ຄອງຖ້າພໍ່ມາ

❊ ບໍ່ຢາກຈາວ່າເວົ້າ
ແຕ່ຮຽມຂໍພັນລະນາ
ວ່າຢູ່ພູເຂົາຄ້ອຍ
ບໍ່ໄດ້ເປັນດັ່ງດ້ານ
ເອົາອອກເຜີຍແບ
ບອກມາພໍຮູ້
ດອນດົງແດນເດັ່ນ
ຮຽມນີ້ວາດຫວັງ...ເພື່ອນເອີຍ!



## ຫົກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສ້ຽມຫ້ຽນ**

❊ **ກອງ**ປະຊຸມສະໄໝສາມັນ**ເທື່ອທີ 8** ຂອງສະພາແຫ່ງຊາດ **ຊຸດທີ IX** ໄດ້ໄຂຂຶ້ນຢ່າງເປັນທາງການ ໃນ**ວັນທີ 18 ພະຈິກນີ້** ທີ່ຫໍປະຊຸມສະພາແຫ່ງຊາດ ແລະ ຈະດຳເນີນໄປຈົນເຖິງວັນທີ **11 ທັນວາ** ຂໍໃຫ້ສຸຂະພາບພ້ອມ ປະຊຸມນັ່ງຍາວນານ ທ່ານ **ສສຊ ເອີຍ!** ເປັນຕົວແທນປະຊາຊົນ ເພື່ອຍືນຍັ່ງສະເໜີເລື່ອງ ສິ່ງທີ່ເຄືອງຄາຂ້ອງ ໝອງໃຈປະຊາໄພ່ ອາໄສທ່ານຊ່ວຍເອົ້າ ໃຫ້ຂຶ້ນເທິງຮັບຮູ້ ຕົກລົງແກ້ກະຈ່າງໃຈເຈົ້າ **ນັ້ນແລ້ວ!**

❊ **ຕາມ**ຂ່າວໃຫ້ຮູ້ວ່າ: **ອັດຕາເງິນເຟີ້**ໃນເດືອນ**ຕຸລາ ຫຼຸດລະດັບ**ລົງມາເລັກໜ້ອຍ ເປັນຜົນພອຍໄດ້ຈາກການຫຼຸດລາຄາລົງຂອງ**ຄ່າຮູບປະພັນ** ແລະ **ນ້ຳມັນເຊື້ອໄຟ** ອີກປັດໄຈໜຶ່ງນັ້ນ ຍ້ອນການເກັບກ່ຽວຕາມລະດູການ ແລະ ຜົນງານການຜະລິດຂອງປວງປະຊາ ແລກປ່ຽນທັງຂາຍຄ້າ ປັບລາຄາບໍ່ໃຫ້ ສູງກາຍເກີນຄ່າ ພາໃຫ້ອັດຕາເງິນບໍ່ເພີ້ມ ທັງຫຼຸດໜ້ອຍຜ່ອນລົງ **ນັ້ນນາ!**

## ຊອບຍິ້ມ

**# ແອ່ນຕຸ້ງ**

### ເລື່ອງ: ໃຜຊີໄວກ່ອນກັນ

ຢູ່ຄ້າຍຕຳຫຼວດແຫ່ງໜຶ່ງມີແມ່ຕູ້ຄົນໜຶ່ງມາແຈ້ງຄວາມກັບຕຳຫຼວດວ່າເກືອບຈະຖືກຂົ່ມຂືນ ຕຳຫຼວດຈຶ່ງສອບຖາມວ່າ:

**ຕຳຫຼວດ:** ມັນເຮັດຈັ່ງໃດກັບແມ່ຕູ້

**ແມ່ຕູ້:** ມັນຈັບແມ່ຕູ້ໄວ້ ລະມັນຄຶກຂີ້ນແມ່ຕູ້ຂຶ້ນ

**ຕຳຫຼວດ:** ແລ້ວຈັ່ງໃດຕໍ່? ເລົ່າມາໂລດ ບໍ່ຕ້ອງອາຍ

**ແມ່ຕູ້:** ແມ່ຕູ້ເລີຍບອກມັນວ່າ ເຈົ້າແກ້ໂສ້ງໂລດ ມັນຊິຊ້າຖ້າຊິຈັບແມ່ໄວ້ຢູ່, ສ່ວນສິ້ນແມ່ຊິຄຶກຂຶ້ນເອງ

**ຕຳຫຼວດ:** ອ້າວ ແມ່ຕູ້ຖືວ່າຈັ່ງຊັ້ນ? ລະມັນເຮັດບໍ່າບໍ່!

**ແມ່ຕູ້:** ແມ່ນ... ມັນກະຄຶກໂສ້ງມັນລົງ ແມ່ຕູ້ກະຄຶກສິ້ນຂຶ້ນ, ຈາກນັ້ນແມ່ກໍໃສ່ເກຍໝາແລ່ນໂລດແລ້ວ ລູກວ່າໃຜຊີໄວກ່ອນກັນ

ຕຳຫຼວດ: !!!!!!

## ຄະຕິເຕືອນໃຈ

**#ດອກຫຍ້າ**

"ຜູ້ທີ່ຢູ່ລອດ ບໍ່ແມ່ນຄົນທີ່ແຂງແກ່ນ ຫຼື ສະຫຼາດທີ່ສຸດ ແຕ່ເປັນຄົນທີ່ຮູ້ຈັກປັບໂຕໄດ້ດີທີ່ສຸດ ໃນທຸກການປ່ຽນແປງ"

ລັດຖະສະພາຕ່າງປະເທດ

## ລັດຖະສະພາອີຣັກເລືອກຕັ້ງປະທານຄົນໃໝ່ ຫຼັງຈາກຕຳແໜ່ງວ່າງເກືອບໜຶ່ງປີ



(Xinhua)-ວັນພະຫັດທີ 31 ຕຸລາຜ່ານມາ, ສະມາຊິກລັດຖະສະພາອີຣັກ ໄດ້ເລືອກຕັ້ງທ່ານ ມະມູດ ອັນ-ມາຊຮາດານີ (Mahmoud al-Mashhadani) ໃຫ້ດຳລົງຕຳແໜ່ງປະທານລັດຖະສະພາຄົນໃໝ່ ຫຼັງຈາກຕຳແໜ່ງດັ່ງກ່າວວ່າງມາເກືອບໜຶ່ງປີ ເນື່ອງຈາກຄວາມຂັດແຍ້ງທາງດ້ານການເມືອງ.

ລັດຖະສະພາກ່າວໃນຖະແຫຼງການວ່າ: ທ່ານ ອັນ-ມາຊຮາດານີ ໄດ້ຮັບເລືອກຕັ້ງເປັນປະທານລັດຖະສະພາຄົນໃໝ່ໃນລະຫວ່າງກອງປະຊຸມລັດຖະສະພາ ຫຼັງຈາກການລົງຄະແນນສຽງໂດຍກົງຮອບທີສອງທີ່ມີສະມາຊິກລັດຖະສະພາເຂົ້າຮ່ວມ 269 ທ່ານ ຈາກທັງໝົດ 329 ທີ່ນັ່ງ; ເຊິ່ງທ່ານໄດ້ຮັບໄຊຊະນະດ້ວຍຄະແນນ 182 ສຽງ, ເມື່ອທຽບກັບຄູ່ແຂ່ງຄືທ່ານ ຊາເລມ ອັນ-ອິສຊາວີ (Salem al-Issawi) ໄດ້ພຽງ 42 ສຽງ.

ທ່ານ ອັນ-ມາຊຮາດານີ, ອາຍຸ 76 ປີ, ເຄີຍດຳລົງຕຳແໜ່ງປະທານສະພາຜູ້ແທນປະຊາຊົນແຕ່ປີ 2006-2008.

ເມື່ອວັນທີ 14 ພະຈິກ 2023, ສານລັດຖະບານກາງອີຣັກ ໄດ້ຕັດສິນຢຸດຕິການດຳລົງຕຳແໜ່ງຂອງທ່ານ ໂມຮຳເມັດ ອັນ-ຮານບູຊີ (Mohammed al-Halbousi) ປະທານສະພາຜູ້ແທນປະຊາຊົນເນື່ອງຈາກລະເມີດກົດໝາຍ.

## LSDP ລົງນາມຂໍ້ຕົກລົງຈັດຕັ້ງລັດຖະບານກັບ PPNA ແລະ DSVL, ອະດີດນາຍົກລັດຖະມົນຕີ ເປັນປະທານລັດຖະສະພາ



(Xinhua) - ວັນຈັນທີ 11 ພະຈິກຜ່ານມາ, ພັກສັງຄົມປະຊາທິປະໄຕແຫ່ງລິດຕົວນີ (LSDP), ພັກຮຸ່ງອາລຸນແຫ່ງ Nemunas (PPNA) ແລະ ສະຫະພາບປະຊາທິປະໄຕ "ເພື່ອລິດຕົວນີ" (DSVL) ໄດ້ລົງນາມໃນຂໍ້ຕົກລົງເພື່ອຈັດຕັ້ງລັດຖະບານປະສົມ. ພາຍໃຕ້ຂໍ້ຕົກລົງດັ່ງກ່າວ, ທ່ານ ກິນເຕົາຕັສ ປາລູຄັສ (Gintautas Paluckas) ຜູ້ນຳ LSDP ຈະເປັນຫົວໜ້າລັດຖະບານຊຸດໃໝ່, ໃນຂະນະທີ່ຜູ້ນຳ DSVL ທ່ານ ເຊົາລິອຸສ ສະເຄວີເນລິສ (Saulius Skvernelis) ອະດີດນາຍົກລັດຖະມົນຕີ ຈະເຮັດໜ້າທີ່ເປັນປະທານລັດຖະສະພາ; ການຈັດສັນຕຳແໜ່ງລັດຖະມົນຕີ ຈະແບ່ງໃຫ້ PPNA 3 ກະຊວງ, DSVL 2 ກະຊວງ ແລະ LSDP 9 ກະຊວງ.

ຂໍ້ຕົກລົງດັ່ງກ່າວລວມມີຄຳໝັ້ນສັນຍາທີ່ຈະສ້າງຕັ້ງກອງທຶນທາງ, ສະເໜີການຜ່ອນຜັນອາກອນມູນຄ່າເພີ່ມສຳລັບໝາກໄມ້ແລະຜັກ, ການປະຕິຮູບກອງທຶນບຳນານຊັ້ນທີສອງ, ເພີ່ມທະວີຄວາມພະຍາຍາມເພື່ອປາບປາມຄວາມກຽດຊັງຄົນຕ່າງຊາດ (xenophobia), ນຳສະເໜີຜູ້ສະໜອງໄຟຟ້າສາທາລະນະຄົນໃໝ່ ແລະ ຢຸດຕິການປະຕິຮູບການສຶກສາ.

ລັດຖະບານປະສົມ ຈະມີຢ່າງໜ້ອຍ 86 ໃນຈຳນວນ 141 ທີ່ນັ່ງ ໃນລັດຖະສະພາ ທີ່ມີອາຍຸການ 4 ປີ.

ຫຼັງຈາກການເລືອກຕັ້ງສອງຮອບໃນວັນທີ 13 ແລະ 27 ຕຸລາຜ່ານມາ, LSDP ໄດ້ຮັບຄະແນນສຽງຫຼາຍທີ່ສຸດໂດຍຊະນະ 52 ທີ່ນັ່ງ, PPNA ແລະ DSVL ໄດ້ຮັບ 20 ແລະ 14 ທີ່ນັ່ງ ຕາມລຳດັບ.

ໃນການລົງຄະແນນສຽງປິດລັບທີ່ກອງປະຊຸມຄັ້ງປະຖົມມະລຶກຂອງລັດຖະສະພາ ຊຸດທີ XIV ເມື່ອວັນພະຫັດທີ 14 ພະຈິກ, ສະມາຊິກລັດຖະສະພາ 107 ທ່ານ ໄດ້ລົງຄະແນນສຽງເຫັນດີຕໍ່ການແຕ່ງຕັ້ງທ່ານ ເຊົາລິອຸສ ສະເຄວີເນລິສ ເປັນປະທານລັດຖະສະພາ, 19 ທ່ານ ບໍ່ເຫັນດີ, 10 ທ່ານ ງົດອອກສຽງ ແລະ ບັດເສຍ 1 ໃບ.

ທ່ານ ສະເຄວີເນລິສ ເກີດທີ່ເມືອງເຄົານັສ (Kaunas) ໃນປີ 1970, ເລີ່ມຕົ້ນການເຮັດວຽກເປັນຄູສອນຢູ່ສະຖາບັນຕຳຫຼວດລິດຕົວນີ ໃນປີ 1994 ແລະ ໄດ້ເລື່ອນຕຳແໜ່ງເປັນຜູ້ບັນຊາການຕຳຫຼວດລິດຕົວນີໃນປີ 2011, ທ່ານໄດ້ຮັບການແຕ່ງຕັ້ງເປັນລັດຖະມົນຕີກະຊວງພາຍໃນ ໃນປີ 2014 ແລະ ຍັງເຄີຍດຳລົງຕຳແໜ່ງນາຍົກລັດຖະມົນຕີ ລະຫວ່າງປີ 2016-2020.

## ຍີ່ປຸ່ນ ບັງຄັບໃຊ້ກົດໝາຍໃໝ່ ເພີ່ມໂທດຜູ້ໃຊ້ໂທລະສັບມືຖື-ມຶນເມົາ ຂະນະຂັບຂີ່ລົດຖີບ



*ກົດໝາຍໃໝ່ຂອງຍີ່ປຸ່ນ ເພີ່ມຄວາມປອດໄພໃນການຂັບຂີ່ລົດຖີບ ມີຜົນບັງຄັບໃຊ້ແລ້ວ ເພື່ອຫຼຸດຜ່ອນອຸບັດເຫດຈາກການໃຊ້ໂທລະສັບສະມາດໂຟນແລະມຶນເມົາ ໃນຂະນະຂັບຂີ່ລົດຖີບ.*

ເວັບໄຊ Japan News ລາຍງານເມື່ອວັນທີ 02 ພະຈິກ 2024 ວ່າ ອົງການຕຳຫຼວດແຫ່ງຊາດຍີ່ປຸ່ນ ໄດ້ອອກຖະແຫຼງການແຈ້ງໃຫ້ປະຊາຊົນຮັບຊາບກ່ຽວກັບການປັບປຸງກົດໝາຍວ່າດ້ວຍການຈະລາຈອນທາງບົກ ເຊິ່ງມີຜົນບັງຄັບໃຊ້ໃນວັນສຸກທີ 01 ພະຈິກຜ່ານມາ, ກຳນົດວ່າ ການໃຊ້ໂທລະສັບມືຖື ຫຼື ໂທລະສັບອັດສະລິຍະ (smartphone) ໃນຂະນະທີ່ຂັບຂີ່ລົດຖີບ ຕ້ອງຖືກຕັດສິນຕິດຄຸກສູງສຸດ 6 ເດືອນ ຫຼືປັບໃໝເງິນສູງສຸດ 100,000 ເຢນ (1 ເຢນ ປະມານ 145 ກີບ); ຢ່າງໃດກໍຕາມ, ຖ້າພຶດຕິກຳດັ່ງກ່າວເຮັດໃຫ້ເກີດອຸບັດເຫດ ຜູ້ກະທຳຜິດຈະຖືກລົງ ໂທດຕິດຄຸກສູງສຸດ 1 ປີ ຫຼື ປັບໃໝເງິນສູງສຸດ 300,000 ເຢນ.

ສຳລັບການຂັບຂີ່ລົດຖີບໃນຂະນະທີ່ມຶນເມົາ ມີໂທດຕິດຄຸກສູງສຸດ 3 ປີ ຫຼືປັບໃໝເງິນສູງສຸດ 500,000 ເຢນ; ຖ້າສານຕັດສິນວ່າບຸກຄົນນັ້ນມຶນເມົາຈົນບໍ່ສາມາດຂັບຂີ່ລົດຖີບໄດ້ຢ່າງປອດໄພ ໂດຍບໍ່ສົນເລື່ອງຂອງລະດັບທາດເຫຼົ້າຫຼາຍໜ້ອຍປານໃດໃນຮ່າງກາຍ, ບຸກຄົນນັ້ນອາດຈະຖືກຕິດຄຸກສູງສຸດ 5 ປີ ຫຼື ປັບໃໝເງິນສູງສຸດ 1 ລ້ານເຢນ.

ນອກຈາກນີ້, ຜູ້ທີ່ຂາຍ ຫຼືສະເໜີເຄື່ອງດື່ມທີ່ມີທາດເຫຼົ້າໃຫ້ແກ່ຜູ້ຂັບຂີ່ລົດຖີບ ຖືວ່າຜິດກົດໝາຍເຊັ່ນກັນ ແລະ ຕ້ອງຖືກລົງໂທດຕິດຄຸກສູງສຸດ 2 ປີ ຫຼື ປັບໃໝເງິນສູງສຸດ 300,000 ເຢນ.

ເຖິງວ່າຍີ່ປຸ່ນເປັນປະເທດທີ່ມີສະຖິຕິອຸບັດເຫດທາງຖະໜົນຕ່ຳກໍຕາມ, ແຕ່ອຸບັດເຫດທີ່ກ່ຽວຂ້ອງກັບລົດຖີບພັດມີທ່າອຽງເພີ່ມຂຶ້ນ; ສະຖິຕິລະຫວ່າງປີ 2012-2017 ພົບການເກີດອຸບັດເຫດຈາກການທີ່ຜູ້ຂັບຂີ່ລົດຖີບໃຊ້ໂທລະສັບມືຖື ຫຼື ສະມາດໂຟນ 295 ກໍລະນີ ແລະ ເພີ່ມຂຶ້ນເປັນ 454 ກໍລະນີ ພາຍໃນ 5 ປີຕໍ່ມາ.

## ຮ່າງລັດຖະທຳມະນູນຂອງກາຕາ ໄດ້ຮັບການເຫັນດີໃນການລົງປະຊາມະຕິ



(Xinhua) - ການປັບປຸງລັດຖະທຳມະນູນຂອງກາຕາ ໄດ້ຮັບການອະນຸມັດໃນການລົງປະຊາມະຕິລະດັບຊາດ, ສຳນັກຂ່າວສານແຫ່ງລັດ QNA ລາຍງານໃນວັນພຸດທີ 06 ພະຈິກນີ້.

ທ່ານ ຄາລິຟາ ບິນ ຮາມັດ ອັນ ທານີ (Khalifa bin Hamad Al Thani) ລັດຖະມົນຕີກະຊວງພາຍໃນ ແລະ ປະທານຄະນະກຳມະການລົງປະຊາມະຕິທົ່ວໄປ ກ່າວໃນຖະແຫຼງການວ່າ: ໂຄງການປັບປຸງລັດຖະທຳມະນູນຖາວອນຂອງກາຕາ ໄດ້ຮັບອັດຕາການເຫັນດີຈາກປະຊາຊົນເຖິງຮ້ອຍລະ 90.6 ຂອງຈຳນວນຄະແນນສຽງທີ່ຖືກຕ້ອງທັງໝົດ.

ວັນທີ 29 ຕຸລາ, ທ່ານ ທາມິມ ບິນ ຮາມັດ ອັນ-ທານີ (Tamim bin Hamad Al-Thani) ຜູ້ປົກຄອງແຫ່ງລັດກາຕາ ໄດ້ອອກລັດຖະດຳລັດຮຽກຮ້ອງໃຫ້ພົນລະເມືອງທຸກຄົນທີ່ມີອາຍຸ 18 ປີຂຶ້ນໄປ ເຂົ້າຮ່ວມການລົງປະຊາມະຕິ.

ອີງຕາມການລາຍງານກ່ອນໜ້ານີ້ຈາກ QNA, ການປັບປຸງລັດຖະທຳມະນູນຫຼ້າສຸດໄດ້ນຳສະເໜີການປັບປຸງທີ່ສຳຄັນຕໍ່ຂອບນະໂຍບາຍພາຍໃນ ແລະ ຕ່າງປະເທດຂອງກາຕາ, ລວມເຖິງວ່າຈະຢຸດຕິການລົງຄະແນນສຽງທີ່ຈຳກັດສຳລັບທີ່ນັ່ງໃນສະພານິຕິບັນຍັດ ຫຼືບໍ່.

# ປິດກອງປະຊຸມຄະນະປະຈຳ NPC



(Xinhua) - ເມື່ອວັນສຸກທີ 8 ພະຈິກຜ່ານມາ, ຄະນະປະຈຳສະພາຜູ້ແທນປະຊາຊົນແຫ່ງຊາດຈີນ (National People's Congress - NPC) ຊຸດທີ XIV ໄດ້ປິດກອງປະຊຸມສະໄໝທີ 12 ໂດຍການເປັນປະທານຂອງທ່ານ ຈ້າວ ເລີ້ຈີ້ (Zhao Leji) ປະທານຄະນະປະຈຳ NPC; ບັນດາສະມາຊິກສະພາ ໄດ້ລົງຄະແນນສຽງຮັບຮອງເອົາກົດໝາຍວ່າດ້ວຍການສຶກສາກ່ອນໄວຮຽນ, ກົດໝາຍວ່າດ້ວຍການຄຸ້ມຄອງວັດຖຸບູຮານທາງວັດທະນະທຳ (ປັບປຸງ), ກົດໝາຍວ່າດ້ວຍຊັບພະຍາກອນແຮ່ທາດ (ປັບປຸງ), ກົດໝາຍວ່າດ້ວຍພະລັງງານ ແລະ ກົດໝາຍວ່າດ້ວຍການຕ້ານການຟອກເງິນ (ປັບປຸງ) ພ້ອມທັງຮັບຮອງເອົາມະຕິກ່ຽວກັບການປັບປຸງກົດໝາຍວ່າດ້ວຍການກວດກາຂອງຄະນະປະຈຳສະພາປະຊາຊົນທຸກຂັ້ນ, ຕົກລົງຍົກຍ້າຍທ່ານ ຫຼີ ສຽວເຜິງ (Li Xiaopeng) ອອກຈາກຕຳແໜ່ງລັດຖະມົນຕີກະຊວງຂົນສົ່ງ ແລະ ແຕ່ງຕັ້ງທ່ານ ຫຼີວ ເຫວີຍ (Liu Wei) ໃຫ້ດຳລົງຕຳແໜ່ງດັ່ງກ່າວແທນ.

ທ່ານ ສີ ຈິ້ນຜິງ ໄດ້ລົງນາມໃນຄຳສັ່ງຂອງປະທານປະເທດ 7 ສະບັບ ເພື່ອປະກາດໃຊ້ກົດໝາຍ ແລະ ການຕົກລົງບັນຫາສຳຄັນຂ້າງເທິງ.

ກອງປະຊຸມໄດ້ຮັບຮອງເອົາມະຕິກ່ຽວກັບການຂະຫຍາຍການອະນຸຍາດດັດແກ້ຊົ່ວຄາວການນຳໃຊ້ຂໍ້ກຳນົດກ່ຽວກັບກົດໝາຍວ່າດ້ວຍລະບົບການວັດແທກ ແລະ ຊັ່ງນໍ້າໜັກ (Metrology) ຢູ່ບັນດາຕົວເມືອງທີ່ປະຕິບັດໂຄງການທົດລອງປັບປຸງສະພາບແວດລ້ອມການດຳເນີນທຸລະກິດ.

ບັນດາສະມາຊິກສະພາ ໄດ້ລົງຄະແນນສຽງຮັບຮອງເອົາຮ່າງກົດໝາຍຂອງສະພາແຫ່ງລັດກ່ຽວກັບການເພີ່ມເພດານໜີ້ສິນຂອງລັດຖະບານທ້ອງຖິ່ນ ເພື່ອທົດແທນໜີ້ສິນເຊື່ອງຊ້ອນທີ່ມີຢູ່, ໃຫ້ສັດຕະຍາບັນຕໍ່ການປັບປຸງອະນຸສັນຍາລອນດອນປີ 1996 ກ່ຽວກັບການປ້ອງກັນມົນລະພິດທາງທະເລໂດຍການຖິ້ມຂີ້ເຫຍື້ອ; ນອກຈາກນີ້, ຍັງໄດ້ຮັບຮອງເອົາບົດລາຍງານຫຼາຍສະບັບກ່ຽວກັບການພິຈາລະນາຂໍ້ສະເໜີຂອງບັນດາສະມາຊິກສະພາ, ລວມທັງບົດລາຍງານຄຸນສົມບັດຂອງຜູ້ແທນ ແລະ ຮ່າງກົດໝາຍທີ່ກ່ຽວຂ້ອງກັບບຸກຄະລາກອນ.

ໃນການກ່າວຄຳເຫັນປິດກອງປະຊຸມ, ທ່ານ ຈ້າວ ໄດ້ຊຸກຍູ້ບັນດາສະມາຊິກສະພາໃຫ້ເພີ່ມທະວີຄວາມຮັບຜິດຊອບຂອງຕົນ ເພື່ອຍົກສູງຄຸນນະພາບວຽກງານຂອງສະພາຜູ້ແທນປະຊາຊົນ; ທ່ານຍັງຮຽກຮ້ອງໃຫ້ມານະພະຍາຍາມປະຕິບັດວຽກງານນິຕິບັນຍັດ, ຕິດຕາມກວດກາ ແລະ ວຽກງານອື່ນໆ ຕາມການແບ່ງໜ້າທີ່ຄວາມຮັບຜິດຊອບສຳລັບຂໍ້ລິເລີ່ມປະຕິຮູບທີ່ສຳຄັນ, ຮັບປະກັນການປະຕິບັດໜ້າທີ່ທີ່ຄະນະບໍລິຫານງານສູນກາງພັກກອມມູນິດຈີນມອບໝາຍໃຫ້ ຢ່າງມີປະສິດທິຜົນ.

# ເຈາະເລິກໂລກ: ອຳນາດແຂວນຢູ່ເທິງເສັ້ນດ້າຍ ຫຼັງຈາກລັດຖະບານຍີ່ປຸ່ນພ່າຍແພ້ການເລືອກຕັ້ງ

**# ແປ ແລະ ຮຽບຮຽງໂດຍ: ວິລະພັດ ພາບວິໄຊ**

(ຊິນຮວາ)-ພູມີທັດທາງການເມືອງຂອງຍີ່ປຸ່ນ ກ້າວເຂົ້າສູ່ຍຸກແຫ່ງຄວາມບໍ່ແນ່ນອນທີ່ເພີ່ມສູງຂຶ້ນພາຍຫຼັງການເລືອກຕັ້ງທົ່ວໄປເມື່ອວັນອາທິດທີ 27 ຕຸລາຜ່ານມາ, ເຊິ່ງລັດຖະບານປະສົມ ສູນເສຍສຽງສ່ວນຫຼາຍທີ່ຖືຄອງມາເປັນເວລາດົນນານ ແລະ ບໍ່ມີພັກໃດມີອຳນາດທີ່ຈະແຈ້ງໃນການຮັບມືກັບສິ່ງທ້າທາຍທາງດ້ານເສດຖະກິດທີ່ປະເທດພວມປະເຊີນຢູ່ໃນປັດຈຸບັນ.

ລັດຖະບານປະສົມລະຫວ່າງພັກເສລີປະຊາທິປະໄຕ (LDP) ແລະ ພັກໂຄເມອິໂຕະ (Komeito) ໄດ້ 215 ຈາກທັງໝົດ 465 ທີ່ນັ່ງ ໃນການເລືອກຕັ້ງສະພາຜູ້ແທນລາດສະດອນ (ສະພາຕ່ຳ) ເຊິ່ງຫຼຸດລົງຈາກເກນສຽງສ່ວນຫຼາຍເປັນຄັ້ງທຳອິດໃນຮອບ 15 ປີ; ເຖິງແມ່ນວ່າ LDP ຈະສົ່ງອະດີດສະມາຊິກສະພາລົງເລືອກຕັ້ງຄືນໃໝ່ໃນນາມຜູ້ສະໝັກເອກະລາດ ເນື່ອງຈາກເລື່ອງເສຍຫາຍທີ່ພາໃຫ້ພວກເຂົາສູນເສຍການຮັບຮອງຈາກພັກ, ແຕ່ລັດຖະບານປະສົມຍັງສູນເສຍສຽງສ່ວນຫຼາຍໃນສະພາຜູ້ແທນລາດສະດອນທີ່ມີອິດທິພົນສູງ.

ນັກວິເຄາະຊີ້ວ່າ ຜົນໄດ້ຮັບດັ່ງກ່າວເປັນ "ຄຳຕັດສິນ" ສຸດທ້າຍຂອງສາທາລະນະຊົນຊາວຍີ່ປຸ່ນຕໍ່ LDP ເຊິ່ງເກີດຈາກເລື່ອງເສຍຫາຍກ່ຽວກັບການລະດົມທຶນທາງການເມືອງຫຼາຍຄັ້ງທີ່ກະຕຸ້ນໃຫ້ເກີດຄວາມບໍ່ພໍໃຈຢ່າງກວ້າງຂວາງ.

ໃນທາງກົງກັນຂ້າມ, ພັກປະຊາທິປະໄຕລັດຖະທຳມະນູນແຫ່ງຍີ່ປຸ່ນ ທີ່ເປັນຝ່າຍຄ້ານຕົ້ນຕໍ ໄດ້ຈຳນວນຜູ້ແທນເພີ່ມຂຶ້ນຢ່າງຫຼວງຫຼາຍ ຈາກ 98 ເປັນ 148 ທີ່ນັ່ງ.

ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ, ສະພານິຕິບັນຍັດຕ້ອງຈັດກອງປະຊຸມສະໄໝພິເສດພາຍໃນ 30 ວັນນັບຈາກວັນເລືອກຕັ້ງ ເຊິ່ງຄະນະລັດຖະບານຊຸດປັດຈຸບັນທີ່ນຳໂດຍທ່ານນາຍົກລັດຖະມົນຕີ ຊິເງຣຸ ອິຊິບະ (Shigeru Ishiba) ຈະລາອອກຈາກຕຳແໜ່ງພ້ອມກັນແລະບັນດາສະມາຊິກສະພາຜູ້ແທນລາດສະດອນທີ່ໄດ້ຮັບເລືອກຕັ້ງໃໝ່ ຈະສະເໜີຊື່ນາຍົກລັດຖະມົນຕີຄົນຕໍ່ໄປ.

ຖ້າໄດ້ຮັບເລືອກອີກຄັ້ງ, ທ່ານອິຊິບະຈະຈັດຕັ້ງຄະນະລັດຖະບານຊຸດທີ 2 ຫຼື ທ່ານອາດສ່ຽງທີ່ຈະກາຍເປັນນາຍົກລັດຖະມົນຕີທີ່ດຳລົງຕຳແໜ່ງສັ້ນທີ່ສຸດຂອງຍີ່ປຸ່ນນັບຕັ້ງແຕ່ສົງຄາມໂລກຄັ້ງທີ II; ຊາຕາກຳຂອງທ່ານໃນຕອນນີ້ແຂວນຢູ່ເທິງເສັ້ນດ້າຍ ແລະ ບັນດານັກວິເຄາະພວມຕິດຕາມເບິ່ງຢ່າງໃກ້ຊິດວ່າ ທ່ານສາມາດລະດົມການສະໜັບສະໜູນ ແລະ ເຈລະຈາກັບບັນດາກຸ່ມຝ່າຍຄ້ານໄດ້ຢ່າງພຽງພໍຫຼືບໍ່ ເພື່ອຮັກສາລັດຖະບານທີ່ໝັ້ນຄົງໃນອະນາຄົດ.

ພັກຂະໜາດນ້ອຍ ເຊັ່ນ ພັກປະຊາທິປະໄຕເພື່ອປະຊາຊົນທີ່ມີ 28 ທີ່ນັ່ງ ແລະ ພັກນະວັດຕະກຳຍີ່ປຸ່ນ 38 ທີ່ນັ່ງອາດມີບົດບາດສຳຄັນໃນພູມີທັດທາງການເມືອງໃນຂະນະນີ້; ຢ່າງໃດກໍຕາມ, ຜູ້ນຳຂອງທັງສອງພັກກ່າວວ່າ ພວກເຂົາຈະບໍ່ເຂົ້າຮ່ວມກັບລັດຖະບານປະສົມຊຸດປັດຈຸບັນ, ແຕ່ເປີດຮັບການຮ່ວມມືເປັນແຕ່ລະກໍລະນີໄປໃນບາງປະເດັນ.

ໃນສະຖານະການອື່ນ, ຫາກວ່າຝ່າຍຄ້ານສາມາດໂຮມເຂົ້າກັນ ບອກກັບສະມາຊິກສະພາທີ່ເປັນເອກະລາດ (ບໍ່ສັງກັດພັກໃດ) ແລະ ໄດ້ຮັບສຽງສ່ວນຫຼາຍ, ການປ່ຽນແປງອຳນາດສາມາດເກີດຂຶ້ນໄດ້.

ເຖິງແມ່ນວ່າລັດຖະບານປະສົມ LDP-Komeito ຈະຍັງຢູ່ໃນອຳນາດ, ແຕ່ການເຈລະຈາກັບພັກທີສາມເພື່ອຂໍການຮ່ວມມືໃນລັດຖະສະພາສຳລັບຮ່າງກົດໝາຍແຕ່ລະສະບັບ ຈະຍິ່ງເຮັດໃຫ້ຄວາມບໍ່ໝັ້ນຄົງທາງການເມືອງຮ້າຍແຮງຂຶ້ນແລະອຳນາດຂອງ LDP ທີ່ມີຕໍ່ລັດຖະບານປະສົມຈະຫຼຸດລົງຢ່າງຫຼວງຫຼາຍ, ເຮັດໃຫ້ການບໍລິຫານງານຂອງທ່ານ ອິຊິບະ ມີຄວາມໝັ້ນຄົງໜ້ອຍລົງ.

ລັດຖະບານຊຸດໃໝ່ຍັງຈະປະເຊີນກັບສິ່ງທ້າທາຍອັນໃຫຍ່ຫຼວງ ລວມເຖິງການປະຕິຮູບທາງດ້ານການເມືອງຢ່າງຈິງຈັງເພື່ອແກ້ໄຂຄວາມບໍ່ພໍໃຈຂອງສາທາລະນະຊົນຕໍ່ເລື່ອງເສຍຫາຍ ແລະແກ້ໄຂບັນຫາທາງດ້ານເສດຖະກິດຈາກລາຄາທີ່ສູງຂຶ້ນ ແລະ ຄ່າຈ້າງທີ່ຢຸດຈົ້ງ.

ໃນສອງສາມປີຜ່ານມາ, ການເຕີບໂຕທາງເສດຖະກິດຊ້າລົງ, ຄ່າຈ້າງທີ່ຄົງຕົວ, ລາຄາທີ່ສູງຂຶ້ນ ແລະ ເງິນເຢນອ່ອນຄ່າລົງຢ່າງຮຸນແຮງ ໄດ້ສ້າງຄວາມທຸກຍາກລຳບາກໃຫ້ແກ່ປະຊາຊົນຍີ່ປຸ່ນ.

ນອກຈາກຄວາມເຄັ່ງຕຶງດ້ານເສດຖະກິດແລ້ວ, ບັນຫາຂໍ້ຂັດແຍ່ງດ້ານຄວາມໝັ້ນຄົງຕ່າງປະເທດ ໂດຍສະເພາະແມ່ນນະໂຍບາຍດ້ານປ້ອງກັນປະເທດ ອາດຈະປະເຊີນກັບສິ່ງທ້າທາຍໃນອະນາຄົດ.

# ສະພາແຫ່ງຊາດບຸນກາລີ ຊຸດໃໝ່ ບໍ່ສາມາດເລືອກປະທານ ໃນກອງປະຊຸມຄັ້ງທຳອິດ ທ່າມກາງຄວາມເຄັ່ງຕຶງທາງການເມືອງ

(Xinhua)-ສະພາແຫ່ງຊາດຊຸດໃໝ່ທີ່ຫາກໍໄດ້ຮັບການເລືອກຕັ້ງ ໄດ້ໄຂກອງປະຊຸມຄັ້ງປະຖົມມະລຶກເມື່ອວັນຈັນທີ 11 ພະຈິກຜ່ານມາ ທ່າມກາງຄວາມຂັດແຍ້ງພາຍໃນ ແລະ ການປະທ້ວງຂອງປະຊາຊົນ.

ສະພາແຫ່ງຊາດບໍ່ສາມາດເລືອກຕັ້ງປະທານສະພາໃນກອງປະຊຸມຄັ້ງທຳອິດຂອງຕົນ ເຖິງແມ່ນວ່າຈະມີຂໍ້ກຳນົດໃນລັດຖະທຳມະນູນ ໃຫ້ເລືອກຕັ້ງປະທານສະພາແຫ່ງຊາດ ນັບແຕ່ໄດ້ຮັບການເລືອກຕັ້ງເມື່ອທ້າຍເດືອນຕຸລາຜ່ານມາ.

ສະມາຊິກສະພາແຫ່ງຊາດ (ສສຊ) 240 ທ່ານ ທີ່ມາຈາກ 8 ພັກການເມືອງ ແລະ ກຸ່ມພັນທະມິດ ບໍ່ສາມາດຮັບຮອງດ້ວຍສຽງສ່ວນຫຼາຍແບບງ່າຍດາຍສຳລັບຜູ້ສະໝັກຮັບເລືອກຕັ້ງເປັນປະທານສະພາຄົນໃດໄດ້; 5 ພັກການເມືອງໄດ້ສະເໜີຜູ້ສະໝັກຂອງຕົນເພື່ອດຳລົງຕຳແໜ່ງນີ້, ແຕ່ບໍ່ມີພັກໃດໄດ້ຮັບການສະໜັບສະໜູນພຽງພໍ.

ຜູ້ສະໝັກ 2 ທ່ານຄື: ທ່ານ ນາງ ຣາຢາ ນາຊາຢານ (Raya Nazaryan) ຈາກພັນທະມິດ GERB-UDF ແລະ ທ່ານອັນເດຣເຊຄອຟ (Andrey Tsekhov) ຈາກພັນທະມິດ We Continue the Change-Democratic Bulgaria (PP-DB) ມີຄຸນສົມບັດຜ່ານເຂົ້າສູ່ການເລືອກຕັ້ງຮອບທີສອງ ໂດຍໄດ້ຮັບການສະໜັບສະໜູນຈາກ ສສຊ 68 ແລະ 67 ສຽງ ຕາມລຳດັບ.

ໃນການເລືອກຕັ້ງຮອບທີສອງ, ທ່ານນາຊາຢານ ໄດ້ຮັບ 68 ສຽງ ຈາກ ສສຊ 69 ທ່ານ ຈາກ GERB-UDF ຂອງຕົນ; ທ່ານ ເຊຄອຟ ໄດ້ຮັບ 68 ສຽງ ລວມມີ 37 ຈາກ PP-DB ຂອງຕົນ, 19 ຈາກພັນທະມິດເພື່ອສິດທິ ແລະ ເສລີພາບ (Alliance for Rights and Freedoms) ຫຼື APS ແລະ 12 ຈາກພັກສິນທຳ ເອກະພາບ ກຽດຕິຍົດ (Morality Unity Honor) ຫຼື MECh.

ທ່ານ ບອຍໂກ ບໍຣິສຊອຟ (Boyko Borissov) ຜູ້ນຳພັກ GERB ກ່າວຕໍ່ສື່ມວນຊົນວ່າ ລັດຖະບານຊຸດຕໍ່ໄປ ສາມາດເປັນລັດຖະບານປະສົມຂອງ GERB-UDF, PP-DB, ພັກສັງຄົມນິຍົມບຸນກາລີ ທີ່ມີ 20 ທີ່ນັ່ງ ແລະ ພັກປະຊາຊົນ ທີ່ມີ 18 ທີ່ນັ່ງ; ທ່ານຍັງສະເໜີຊື່ຕົນເອງເປັນນາຍົກລັດຖະມົນຕີອີກດ້ວຍ.

ຢ່າງໃດກໍຕາມ, ຜູ້ນຳພັກປະຊາຊົນ ທ່ານ ໂທຊໂກ ຢໍດານອຟ (Toshko Yordanov) ປະຕິເສດຄວາມຄິດດັ່ງກ່າວໂດຍກ່າວວ່າ ພັກຂອງຕົນຍັງບໍ່ໄດ້ປຶກສາຫາລືກັນ.

ໃນຂະນະດຽວກັນ, ເກີດການປະທ້ວງຢູ່ໃຈກາງເມືອງ, ບາງຂະບວນປະທ້ວງທີ່ຈັດຂຶ້ນໂດຍບັນດາພັກການເມືອງທີ່ບໍ່ໄດ້ເຂົ້າຮ່ວມສະພາແຫ່ງຊາດ ໄດ້ເອີ້ນສະພາແຫ່ງຊາດບຸນກາຣີວ່າ "ຜິດກົດໝາຍ"; ກຸ່ມອື່ນໆຮຽກຮ້ອງໃຫ້ມີການປ່ຽນແປງ ລວມທັງປະມວນກົດໝາຍການເລືອກຕັ້ງໃໝ່ ແລະ ການປັບປຸງຄວາມປອດໄພທາງຖະໜົນ.

ການເລືອກຕັ້ງສະພາແຫ່ງຊາດ ໃນວັນທີ 27 ຕຸລາຜ່ານມາ ພວມປະເຊີນກັບການກວດກາທາງກົດໝາຍ ຫຼັງຈາກສານລັດຖະທຳມະນູນໄດ້ເປີດການສືບສວນເມື່ອວັນສຸກທີ 08 ພະຈິກ ກ່ຽວກັບການທຸດຈະລິດຢູ່ໜ່ວຍປ່ອນບັດ 52 ແຫ່ງ, ການສືບສວນດັ່ງກ່າວມີຂຶ້ນຫຼັງຈາກ ສສຊ 67 ທ່ານ ຮ້ອງຂໍຢ່າງເປັນທາງການໂດຍໄດ້ອ້າງເຖິງວິດີໂອທີ່ສະແດງໃຫ້ເຫັນວ່າບັດລົງຄະແນນສຽງຖືກຈັດວາງບໍ່ຖືກຕ້ອງລະຫວ່າງພັກການເມືອງ ເຊິ່ງສົ່ງຜົນກະທົບຕໍ່ຜົນການເລືອກຕັ້ງລະດັບຊາດ.

ໃນວັນຈັນທີ 11 ພະຈິກ, ສານໄດ້ເລີ່ມການສືບສວນຄັ້ງທີສອງ ຫຼັງຈາກ ສສຊ 58 ທ່ານ ໄດ້ສະແດງຄວາມເປັນຫ່ວງຕື່ມອີກ ໂດຍກ່າວຫາວ່າ "ມີການລະເມີດຈຳນວນຫຼາຍ ແລະ ຫຼາກຫຼາຍ" ໃນລະຫວ່າງການເລືອກຕັ້ງ.

ວິເສດ ສະແຫວງສຶກສາ

# ເຮັດເອງ ໃຊ້ເອງ ມີແຕ່ເຮັ່ງກັບລວຍ

ເຫິງມາແລ້ວ, ເຄີຍໄດ້ອ່ານບົດປະເພດແຫຍ່ສ້ວງ ເລື່ອງນິດໄສນິຍົມຊົມຊອບໃຊ້ສອຍສິນຄ້ານຳເຂົ້າຈົນລືມຄຳຂວັນ "ລາວເຮັດ ລາວໃຊ້ ລາວໄດ້ ລາວຈະເລີນ" ບົດທີ່ວ່ານັ້ນ ໄດ້ຕັ້ງຄຳຖາມງ່າຍໆ ແຕ່ໜັກຫົວອອກມາວ່າ "ລອງໄຈ້ແຍກຄັກໆເບິ່ງ ວ່າໃນຖ້ວຍເຝີໜຶ່ງຖ້ວຍມີຜະລິດຕະພັນຈາກພາຍໃນຈັກສ່ວນ ? ເຊັ່ນ: ເຄື່ອງປຸງ, ຜັກແກ້ມ, ເກືອ, ໝາກເຜັດ ລາມໄປຮອດໄມ້ຈິ້ມແຂ້ວ... ຖາມແລ້ວ ເຈົ້າຂອງບົດດັ່ງກ່າວ ກໍຕອບເອງຄືນວ່າ ແມ່ນແຕ່ເກືອຝຸ່ນທີ່ລາວເຮົາເອງຜະລິດ ກໍຍັງເສືອກໄປຊື້ເກືອເປັນໂຖນ້ອຍໆມາໃຊ້, ສ່ວນໝາກເຜັດ ແລະ ຜັກແກ້ມນັ້ນກໍບໍ່ແນ່ວ່າຂອງປູກເອງພາຍໃນ.

ເທສະການອາຫານທີ່ຈັດຂຶ້ນອ່າວຖີ່ໃນປັດຈຸບັນ ກໍຍັງບໍ່ສາມາດເອກອ້າງໄດ້ວ່າມີລົດຊາດລາວເຕັມຮ້ອຍແທ້ໆ ເພາະເຄື່ອງປຸງເກືອບທັງໝົດ ເປັນຜະລິດຕະພັນນຳເຂົ້າ ໄຄແຕ່ວ່າດຽວນີ້ນ້ຳປາແດກອະນາໄມຂອງລາວ, ແຈ່ວປ້າບ້ຳ, ແຈ່ວຫຼາຍຊະນິດໄດ້ຍາດເອົາພື້ນທີ່ຕະຫຼາດ ແຕ່ກໍຍັງມີຈຳນວນໜ້ອຍ ທຽບກັບພາກສ່ວນນຳເຂົ້າ. ສະຫຼຸບຄວາມວ່າ: ໃນປັດຈຸບັນ, ຜະລິດຕະພັນປ່ຽນແທນ ທີ່ຜະລິດໄດ້ຢູ່ພາຍໃນ ໄດ້ມີທີ່ແໜງຫຼາຍຂຶ້ນ ແຕ່ຍັງຄານຳ "ຄ່ານິຍົມ" ເດີມໆ ທີ່ປູກຝັງຢັ່ງຮາກມາດົນໃນສັງຄົມລາວພວກເຮົາບໍລິໂພກຂອງຕ່າງປະເທດ ຄຳຂວັນ: "ລາວເຮັດ ລາວໄດ້ ລາວໃຊ້ ລາວຈະເລີນ" ກໍເລີຍຍັງພໍແຕ່ເປັນລົມປາກຊື່ໆ. ແລ້ວມັນເປັນຍ້ອນຫຍັງ? ຄຳຕອບນີ້ ທ່ານຜູ້ອ່ານທັງຫຼາຍຄົງຊອກເອງໄດ້ ຫຼື ຕອບຕາມບົດຮຽນຂອງຫວຽດນາມ ໃນບົດລວມຫວຽດນາມ ຍົກລະດັບຄຸນນະພາບສິນຄ້າເພື່ອດຶງດູດຜູ້ບໍລິໂພກພາຍໃນ "ໃນໜັງສືພິມ ປະຊາຊົນ ສະບັບວັນທີ 15 ຕຸລາປີນີ້. ຢູ່ຫວຽດນາມໜ່ວຍງານທີ່ເຮັດໜ້າທີ່ປຸກລະດົມຂົນຂວາຍສ້າງຄ່ານິຍົມຊົມໃຊ້ສິນຄ້າພາຍໃນນັ້ນ ເອີ້ນວ່າ: ຄະນະຊີ້ນຳສູນກາງ. ປະທານຄົນປັດຈຸບັນຂອງຄະນະຊີ້ນຳດັ່ງກ່າວແມ່ນທ່ານ ໂດ່ວັນ ຈຽນ ປະທານຄະນະກຳມະການສູນກາງແນວໂຮມປະເທດຊາດຫວຽດນາມ (ທຽບກັບປະທານສູນກາງແນວລາວສ້າງຊາດຂອງພວກເຮົາ) ເປົ້າໝາຍການສົ່ງເສີມຄ່ານິຍົມໃຊ້ສອຍສິນຄ້າພາຍໃນຢູ່ຫວຽດນາມ ຍ່ອມມີລະດັບຄວາມແຕກຕ່າງກັນໃນແຕ່ລະໄລຍະເຊັ່ນ ໃນໄລຍະເພື່ອ "ກິນອີ່ມ-ນຸ່ງອຸ່ນ" ແລະ ໃນໄລຍະ "ກິນແຊບ-ນຸ່ງງາມ".

ໃນປັດຈຸບັນ ປັດໄຈທີ່ເປັນແມ່ແຮງເພື່ອດຶງດູດໃຫ້ຄົນຫວຽດນາມຊົມໃຊ້ຜະລິດຕະພັນພາຍໃນ ກໍຄືຕ້ອງໃຫ້ສິນຄ້າພາຍໃນກວມອັດຕາສ່ວນຢູ່ຕະຫຼາດໃນລະດັບສູງ ແລະ ສິນຄ້າກໍຕ້ອງຮັບປະກັນໃຫ້ມີຄຸນນະພາບດີ, ມີສີສັນ ແລະ ຮູບຮ່າງໜ້າຕາດີ ແລະ ລາຄາທີ່ເໝາະສົມດີ ເອີ້ນວ່າ "3 ດີ" ກໍບໍ່ຜິດ. ເພື່ອບັນລຸ "3 ດີ" ດັ່ງກ່າວ ແນ່ນອນບັນດາວິສາຫະກິດທີ່ເປັນເຈົ້າການຜະລິດສິນຄ້າກໍຕ້ອງໃສ່ໃຈເລື່ອງວິທີການດຶງດູດຜູ້ບໍລິໂພກດ້ວຍ 4 ຫຼັກການ ດັ່ງນີ້: 1. ຍົກສູງຄຸນນະພາບ, 2. ຮູບແບບ, 3. ຫຼຸດຜ່ອນລາຍຈ່າຍສັ້ນເຂົ້າ ແລະ ອັນທີ 4 ຕ້ອງມີລະບົບການໃຫ້ບໍລິການຫຼັງການຂາຍ ເພື່ອເພີ່ມກຳລັງແກ່ງແຍ້ງ, ໃນ 4 ຫຼັກການນີ້ ຜູ້ຂຽນສົນໃຈຂອດ "ຫຼຸດຜ່ອນລາຍຈ່າຍສັ້ນເຂົ້າ" ເພາະວ່າສິນຄ້າທີ່ຜະລິດພາຍໃນບາງຊະນິດຢູ່ບ້ານເຮົາທີ່ຍັງບໍ່ມີລາຄາແພງກວ່າສິນຄ້ານຳເຂົ້ານັ້ນ ກໍຍ້ອນວ່າລາຍຈ່າຍສັ້ນເຂົ້າຍັງແພງ ເຊັ່ນ: ຜະລິດນ້ຳດື່ມໄດ້ເອງແຕ່ຕຸກບັນຈຸຜັດເຮັດເອງບໍ່ໄດ້, ບໍ່ນັບບັນດາໂຖແກ້ວ, ໂຖຢາງທີ່ໃຊ້ບັນຈຸສິນຄ້າພາຍໃນ ກໍລ້ວນແຕ່ນຳເຂົ້າ ແລ້ວຈະບໍ່ໃຫ້ສິນຄ້າພາຍໃນແພງໄດ້ແນວໃດ? ນີ້ເປັນພຽງຕົວຢ່າງນ້ອຍໆຊື່ໆ. ນອກຈາກ 4 ຫຼັກການທີ່ເຫຼົ່າວິສາຫະກິດຕ້ອງໃສ່ໃຈເວລາຜະລິດສິນຄ້າແລ້ວ ກໍຍັງຕ້ອງໄດ້ເລືອກເຟັ້ນສູດພັດທະນາກິດຈະການຂອງພວກຕົນໃຫ້ສອດຄ່ອງກັບຍຸກສະໄໝ ແລະ ສະພາບແວດລ້ອມ ຄືຕ້ອງເລືອກວິທີທີ່ຍືນຍົງ, ຮັກສານິເວດສີຂຽວ (ເອີ້ນວ່າເປັນມິດກັບສິ່ງແວດລ້ອມ) ແລະ ຜະລິດຕະພັນຕ້ອງໄດ້ມາດຕະຖານສາກົນ; ເຮັດເອງ ໃຊ້ເອງ ຄືຫວຽດນາມ ຈະມີແຕ່ເຮັ່ງກັບລວຍ ຫັ້ນລະ !

ທະນາຄານພັດທະນາລາວ
LDB Bank




# ຈົນຕາແຈ

#ບ່າວກະບື

ທ່ານແຈັກເຊີນ, ເຊິ່ງເປັນພະນັກງານຂັ້ນສູງຜູ້ໜຶ່ງ ຂັບລົດໄປຕາມທາງທີ່ແອອັດໃນນະຄອນຫຼວງ. ຍ້ອນເຂົາລະເມີດກົດຈະລາຈອນ ດັ່ງນັ້ນຈຶ່ງຖືກເຈົ້າໜ້າທີ່ໜຸ່ມຢຸດ. ທ່ານແຈກເຊີນບອກຊື່ໃຫ້ເຈົ້າໜ້າທີ່ຊາບ. ເຈົ້າໜ້າທີ່ຢຸດຄິດດາວໜຶ່ງ ແລ້ວຖາມວ່າທ່ານເຄີຍເປັນທະນາຍຄວາມທີ່ມີຊື່ສຽງບໍ່. ທ່ານແຈກເຊີນຕອບວ່າແມ່ນ. ຕໍ່ມາ, ເຈົ້າໜ້າທີ່ຖາມຕື່ມວ່າ ທ່ານແມ່ນຄົນຄົນດຽວກັບທະນາຍຄວາມທີ່ເຄີຍເປັນຫົວໜ້າສານປະຈຳເທດສະບານເມືອງ ແລະ ປັດຈຸບັນເປັນໄອຍະການບໍ່, ຄວາມຫວັງຂອງທ່ານແຈກເຊີນ ກໍ່ຕໍ່ລື່ນໃນຂະນະທີ່ເຂົາຕອບຮັບວ່າແມ່ນແທ້. ເຈົ້າໜ້າທີ່ໜຸ່ມເວົ້າອອກມາວ່າ: "ດີແລ້ວເດ... ຂັ້ນທ່ານຄົງຈະບໍ່ສາມາດແກ້ຕົວວ່າ ທ່ານບໍ່ຮູ້ກົດໝາຍແມ່ນບໍ່?"

# Cornered

#BAOKBU

Mr Jackson, now one of the top-ranking officials, was driving a long a busy road in the capital city when he committed a traffic biolation and was stopped by a young constable. Jackson gave his name to the constable who thought for a moment and then asked if the drive was the well-known lawyer. Mr. Jackson replied in the affirmative. The constable then asked if he was the same lawyer who had become the chief of the municipal's court and was now a public prosecutor.

Jackson's hopes were on the rise as he responded that it was indeed correct "Well" said the constable. "you won't be able to plead ignorance of the law will you?".




• ໂດຍ : ພູຜາ

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມົ່ງມູນຄຸນ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ